ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2024

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະອຳນວຍການ	3
ບົດລາຍງານຂອງນັກກວດສອບອິດສະຫຼະ	4 - 8
ໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ	9 - 10
ໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ	11
ໃບລາຍງານສ່ວນປ່ຽນແປງທຶນຜູ້ຖືຮຸ້ນແບບສັງລວມ ແລະ ແບບແຍກກິດຈະການ	12 - 13
ໃບລາຍງານກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການ	14 - 16
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ	17 - 55

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ບໍລິສັດ"), ບໍລິສັດໃນເຄືອຂອງ ລັດວິສາຫະກິດ ໄຟຟ້າລາວ ("ຟຟລ"), ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ໄດ້ດຳເນີນກິດຈະການ ແລະ ຕັ້ງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນໂດຍ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 ("ວັນສ້າງຕັ້ງບໍລິສັດ") ເຊິ່ງໃບທະບຽນວິສາຫະກິດສະບັບປັບປຸງລ່າສຸດເລກທີ 1180/ຈວທ ລົງວັນທີ 8 ມິຖຸນາ 2022 ອອກໂດຍກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ.

ບໍລິສັດໄດ້ຈົດທະບຽນໂດຍເລີ່ມຈາກ ລັດວິສາຫະກິດໄຟຟ້າລາວ ເຊິ່ງເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດພະລັງງານຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະຂອງບໍລິສັດໂດຍອີງຕາມສຳນັກງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສຳນັກງານນາຍົກລັດຖະມົນຕີ, ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນໂຄງການໂຮງງານໄຟຟ້າອິດສະຫຼະ ("IPP") ໃຫ້ກັບບໍລິສັດ.

ໃນວັນທີ 15 ທັນວາ 2010, ວັນສ້າງຕັ້ງບໍລິສັດ, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງເຂື່ອນໄຟຟ້າ 7 ແຫ່ງ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລີກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊລະບໍ ຕາມມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010 ໃຫ້ບໍລິສັດ ເປັນຈຳນວນເງິນ 2,605,792 ລ້ານກີບ. ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າຂອງຕົນໂດຍ ສ່ວນໃຫຍ່ແມ່ນອີງຕາມການໂອນຍ້າຍຊັບສິນດັ່ງກ່າວ ເພື່ອສະໜອງໄຟຟ້າທີ່ຜະລິດໄດ້ ຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນສັນຍາຊື້ - ຂາຍພະລັງງານ ("PPA").

ນອກຈາກນັ້ນ, ບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮຸ້ນສ່ວນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ຂໍ້ມູນທາງການເງິນນີ້ ໄດ້ຮັບອະນຸມັດອອກໂດຍຄະນະກຳມະການສະພາຜູ້ບໍລິຫານ ໃນວັນທີ 31 ມີນາ 2025.

ສະພາຜູ້ບໍລິຫານ

ສະມາຊິກສະພາຜູ້ບໍລິຫານສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີອອກປົດລາຍງານສະບັບນີ້ແມ່ນ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ສຸລິວັດ ສຸວັນນະຈູມຄຳ	ປະທານ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ປ.ອ ອາຄົມເດດ ວົງໄຊ	ຮອງປະທານ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ສຸກສະຫວາດ ໄສສຸພັນ	ສະມາຊິກ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ຊິນລະວິດ ວິນິດໄສ	ສະມາຊິກ	
ທ່ານ ວິເລດ ກົມນາວົງ	ສະມາຊິກ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ປ.ອ ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫຼະ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ພັນປານີ ສິດທິລາດ	ກຳມະການອິດສະຫຼະ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ປະສົມເພັດ ຄຳຕັນ	ສະມາຊິກ	ລາອອກວັນທີ 24 ມີນາ 2025
ທ່ານ ສົມພິດ ແກ້ວວິຈິດ	ສະມາຊິກ	ລາອອກວັນທີ 24 ມີນາ 2025
ທ່ານ ຄຳມູນ ວິພິງໄຊ	ສະມາຊິກ	ລາອອກວັນທີ 24 ມີນາ 2025
ທ່ານ ດາວວຽງ ສຸນັນທະລາດ	ສະມາຊິກ	ລາອອກວັນທີ 24 ມີນາ 2025
ທ່ານ ປ.ອ ບຸນແທນ ຈັນສະໄໝ	ສະມາຊິກ	ລາອອກວັນທີ 24 ມີນາ 2025
ທ່ານ ຄຳແກ້ວ ວິສີສົມບັດ	ສະມາຊິກ	ລາອອກວັນທີ 24 ມີນາ 2025
ທ່ານ ປ.ອ ພັນປະກິດ ອ່ອນພັນດາລາ	ສະມາຊິກ	ລາອອກວັນທີ 24 ມີນາ 2025

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີອອກປົດລາຍງານສະບັບນີ້ແມ່ນ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ສຸກສະຫວາດ ໄສສຸພັນ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ດາວວຽງ ສຸນັນທະລາດ	ຮອງຜູ້ອຳນວຍການໃຫຍ່ ສາຍງານພັດທະນາທຸລະກິດ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ຄຳໃບ ຫຼວງໄຊ	ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ນາງ ໂພຄົນ ອັບໄພ	ຮອງຜູ້ອຳນວຍການໃຫຍ່ ສາຍງານບໍລິຫານ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ສີລິພົມ ແສງອ່ອນແກ້ວ	ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ	ແຕ່ງຕັ້ງວັນທີ 24 ມີນາ 2025
ທ່ານ ວິງສະກຸນ ຍິ່ງຍົງ	ຜູ້ອຳນວຍການໃຫຍ່	ລາອອກວັນທີ 08 ຕຸລາ 2024
ທ່ານ ປອ ບຸນແທນ ຈັນສະໄໝ	ຮອງຜູ້ອຳນວຍການໃຫຍ່	ຍົກຍ້າຍໄປຮັບໜ້າທີ່ໃໝ່ ວັນທີ 30 ກໍລະກົດ 2024

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດ ວັນທີ 1 ມັງກອນ 2024 ຫາ ວັນທີ 08 ຕຸລາ 2024 ແມ່ນ ທ່ານ ວິງສະກຸນ ຍິ່ງຍົງ, ຜູ້ອຳນວຍການໃຫຍ່ ແລະ ຕໍ່ແມ່ນ ທ່ານ ດາວວຽງ ສຸນັນທະລາດ, ຮັກສາການ ຜູ້ອຳນວຍການໃຫຍ່, ຕັ້ງແຕ່ວັນທີ 22 ຕຸລາ 2024 ຈົນເຖິງວັນທີ 23 ມີນາ 2025. ເລີ່ມແຕ່ວັນທີ 24 ມີນາ 2025 ຈົນເຖິງວັນທີອອກປົດລາຍງານສະບັບນີ້ແມ່ນ ທ່ານ ສຸກສະຫວາດ ໄສສຸພັນ, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນ ແອນ ຢັ້ງ ລາວ ຈຳກັດ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ຜ-ຟຟລ" ຫຼື "ບໍລິສັດ") ມີຄວາມຍິນດີນຳສະເໜີເອກະສານລາຍງານການເງິນແບບແຍກກິດຈະການ ແລະ ເອກະສານລາຍງານການເງິນແບບສັງລວມຂອງບໍລິສັດ ແລະ ບັນດາບໍລິສັດໃນເຄືອຂອງຕົນເອງ ("ກຸ່ມບໍລິສັດ") ນະວັນທີ ແລະ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ("ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ").

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການແບບເງິນສັງລວມ ແລະ ແບບແຍກກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ (ເອົ້າລວມແມ່ນ "ເອກະສານລາຍງານການເງິນ") ທີ່ກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີ ທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນ. ໃນການກະກຽມເອກະສານລາຍງານການເງິນນັ້ນ, ຄະນະຜູ້ອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ຂໍ້ມູນທີ່ມີສາລະສຳຄັນແມ່ນໄດ້ຖືກເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດ ຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະອຳນວຍການມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ຮັບການເປີດເຜີຍຕາມຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາ, ກ່ຽວກັບຖານະທາງການເງິນແບບສັງລວມ ແລະ ແບບແຍກກິດຈະການຂອງບໍລິສັດ ແລະ ຮັບປະກັນວ່າການລົງບັນຊີ ສອດຄ່ອງກັບຫຼັກການທາງດ້ານບັນຊີທີ່ເໝາະສົມ. ຄະນະອຳນວຍການມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະອຳນວຍການຂໍຢັ້ງຢືນວ່າບໍລິສັດໄດ້ປະຕິບັດຕາມຂໍ້ກຳນົດທີ່ໄດ້ກ່າວມາຂ້າງເທິງ ໃນການກະກຽມເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ.

ຖະແຫຼງການຂອງຄະນະອຳນວຍການ

ພວກຂ້າພະເຈົ້າ ຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ທີ່ໄດ້ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ.

ຕາງໜ້າຄະນະອຳນວຍການ:

ທ່ານ ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2025

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 68381839/12202013

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ທີ່ນັບຖື

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນແບບແຍກກິດຈະການ ຂອງບໍລິສັດ ຜະລິດໄຟຟ້າ ລາວມະຫາຊົນ ("ບໍລິສັດ") ແລະ ເອກະສານລາຍງານການເງິນແບບສັງລວມຂອງບໍລິສັດ ແລະ ບໍລິສັດໃນເຄືອ ("ກຸ່ມບໍລິສັດ"), ເຊິ່ງປະກອບດ້ວຍເອກະສານລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ ນະວັນທີ 31 ທັນວາ 2024, ໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນຜູ້ຖືຮຸ້ນແບບສັງລວມ ແລະ ແບບແຍກກິດຈະການ, ໃບລາຍງານກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການ ສຳລັບປີສິ້ນສຸດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ, ລວມທັງສະຫຼຸບກ່ຽວກັບນະໂຍບາຍການບັນຊີທີ່ສຳຄັນ (ເອົ້າລວມແມ່ນ "ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ").

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການຂອງບໍລິສັດໄດ້ຖືກກະກຽມ ແລະ ນຳສະເໜີໂດຍສອດຄ່ອງກັບນະໂຍບາຍການບັນຊີຕາມທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ (ISA). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າພາຍໃຕ້ມາດຕະຖານສາກົນດັ່ງກ່າວ ແມ່ນໄດ້ຖືກອະທິບາຍເພີ່ມເຕີມໃນວັກ ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບຈັນຍາບັນຂອງນັກວິຊາຊີບບັນຊີຂອງ ສະພານັກບັນຊີສາກົນວ່າດ້ວຍມາດຕະຖານຂໍ້ບັນຍັດດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງມາດຕະຖານສາກົນດ້ານຈັນຍາບັນ.

ບັນຫາທີ່ຄວນເອົາໃຈໃສ່

ນະໂຍບາຍການບັນຊີ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ, ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍບໍລິສັດ ແລະ ກຸ່ມບໍລິສັດ. ບັນດານະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນແບບສັງລວມ ແລະ ແບບແຍກກິດຈະການ, ຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ແລະ ກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການຂອງກຸ່ມບໍລິສັດເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

A member firm of Ernst & Young Global Limited

ຄວາມບໍ່ແນ່ນອນທີ່ສຳຄັນຕໍ່ກັບຄວາມສືບເນື່ອງໃນການດຳເນີນງານທຸລະກິດ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 2 ທີ່ໄດ້ລະບຸວ່າ:

- ບໍລິສັດຂາດທຶນສຸດທິ 1,702,012 ລ້ານກີບ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024. ແລະ ນະວັນທີ ວັນທີ 31 ທັນວາ 2024 ບໍລິສັດ ມີຂາດທຶນສະສົມ 205,377 ລ້ານກີບ ແລະ ໜີ້ສິນໝຸນວຽນ 8,771,256 ລ້ານກີບ ເຊິ່ງຫຼາຍກວ່າຊັບສິນໝຸນວຽນ (ເຊິ່ງບໍ່ລວມຂາດທຶນ ຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ 7,644,729 ລ້ານກີບ) ຈຳນວນ 6,842,679 ລ້ານກີບ.

- ກຸ່ມບໍລິສັດຂາດທຶນສຸດທິ 1,710,517 ລ້ານກີບ ສຳລັບປີສິ້ນສຸດ ວັນທີ ວັນທີ 31 ທັນວາ 2024. ແລະ ນະວັນທີ ວັນທີ 31 ທັນວາ 2024, ກຸ່ມບໍລິສັດມີຂາດທຶນສະສົມ 227,756 ລ້ານກີບ ແລະ ໜີ້ສິນໝຸນວຽນ 8,804,902 ລ້ານກີບ ເຊິ່ງຫຼາຍກວ່າຊັບສິນໝຸນວຽນ (ຊຶ່ງບໍ່ລວມຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ 7,644,729 ລ້ານກີບ) ຈຳນວນ 6,912,048 ລ້ານກີບ.

ເຫດການດັ່ງກ່າວຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ສຳຄັນເຊິ່ງອາດກໍ່ໃຫ້ເກີດຂໍ້ສົງໄສທີ່ເປັນສາລະສຳຄັນກ່ຽວກັບຄວາມສາມາດໃນຄວາມສືບ ເນື່ອງໃນການດຳເນີນທຸລະກິດຂອງກຸ່ມບໍລິສັດ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

ບັນຫາສຳຄັນ

ບັນຫາສຳຄັນໃນການກວດສອບ ແມ່ນບັນດາບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການຂອງປີປັດຈຸບັນຕາມການຕັດສິນແບບມືອາຊີບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ພິຈາລະນາແລ້ວວ່າບັນຫາທີ່ ອະທິບາຍໄວ້ດ້ານລຸ່ມນີ້ເປັນບັນຫາສຳຄັນໃນການກວດສອບທີ່ໄດ້ຖືກສື່ສານໃນບົດລາຍງານຂອງພວກຂ້າພະເຈົ້າ. ບັນຫາເຫຼົ່ານີ້ ແມ່ນໄດ້ຮັບ ການແກ້ໄຂໃນບົດລາຍງານຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນຂອງກຸ່ມບໍລິສັດທັງໝົດ ແລະ ໃນການອອກຄຳເຫັນຂອງ ພວກຂ້າພະເຈົ້າ ແລະ ພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແຍກຕ່າງກັບບັນຫາເຫຼົ່ານີ້. ສຳລັບແຕ່ລະບັນຫາລຸ່ມນີ້, ພວກຂ້າພະເຈົ້າກໍໄດ້ອະທິບາຍ ວິທີການກວດສອບໃນການແກ້ໄຂບັນຫາດັ່ງກ່າວ.

ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທີ່ໄດ້ຖືກອະທິບາຍໄວ້ໃນວັກຂອງຄວາມຮັບຜິດຊອບຂອງນັກກວດສອບ ໃນການ ກວດສອບເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ຂອງບົດລາຍງານຂອງພວກຂ້າພະເຈົ້າ ເຊິ່ງລວມເຖິງບັນຫາ ເຫຼົ່ານີ້ດ້ວຍ. ດັ່ງນັ້ນ, ການກວດສອບຂອງຂ້າພະເຈົ້າແມ່ນລວມເຖິງການປະຕິບັດຂັ້ນຕອນໃນການອອກແບບເພື່ອຕອບສະໜອງການປະເມີນ ຄວາມສ່ຽງຕໍ່ກັບຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ. ຜົນຂອງຂັ້ນຕອນ ກວດສອບຂອງພວກຂ້າພະເຈົ້າ ເຊິ່ງລວມເຖິງບັນດາຂັ້ນຕອນທີ່ດຳເນີນການເພື່ອຕອບສະໜອງຕໍ່ກັບບັນຫາດ້ານລຸ່ມນີ້ ແມ່ນໄດ້ເປັນຫຼັກການ ໃນການອອກຄຳເຫັນຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການຂອງບໍລິສັດ.

ການປະເມີນມູນຄ່າຂອງໜີ້ຕ້ອງຮັບທາງການຄ້າ

ນະວັນທີ 31 ທັນວາ 2024, ໜີ້ຕ້ອງຮັບທາງການຄ້າ ແມ່ນມີຈຳນວນ 319,336 ລ້ານກີບ (2023: 1,009,321 ລ້ານກີບ), ໃນນັ້ນຈຳນວນ 153,178 ລ້ານກີບ ແມ່ນໜີ້ຕ້ອງຮັບໄລຍະຍາວ ແລະ ຄ້າງຮັບເກີນຫົກເດືອນ (2023:281,814 ລ້ານກີບ). ພວກຂ້າພະເຈົ້າຖືວ່າການປະເມີນ ມູນຄ່າຂອງໜີ້ຕ້ອງຮັບທາງການຄ້າຖືເປັນບັນຫາສຳຄັນໃນການກວດສອບ ເນື່ອງຈາກບັນຫາດັ່ງກ່າວມີຄວາມສຳຄັນທີ່ຕ້ອງໄດ້ປຶກສາຫາລືກັບ ຝ່າຍບໍລິຫານກ່ຽວກັບດຸນພິນິດເພື່ອຢັ້ງຢືນການຫັກເງິນແຮຂອງໜີ້ສິນດັ່ງກ່າວ. ນັບຕັ້ງແຕ່ຝ່າຍບໍລິການໄດ້ປະເມີນເງິນແຮໂດຍອີງຕາມ ປະຫວັດການຊຳລະຂອງໜີ້ຕ້ອງຮັບ ແລະ ຄາດຄະເນຄວາມສາມາດໃນການເກັບຄືນຂອງໜີ້ຕ້ອງຮັບດັ່ງກ່າວ ເຊິ່ງຕິດພັນກັບຄວາມສາມາດໃນ ການຊຳລະຂອງລູກຄ້າ ແລະ ໜີ້ສິນອື່ນໆທີ່ກ່ຽວຂ້ອງເພື່ອສະໜັບສະໜຸນການຕັດສິນໃຈ ແລະ ການສົມມຸດຖານຂອງຝ່າຍບໍລິຫານ.

A member firm of Ernst & Young Global Limited

Building a better working world

ດ້ວຍເຫດນີ້, ຂັ້ນຕອນໃນການກວດສອບຂອງພວກຂ້າພະເຈົ້າຕໍ່ກັບບັນຫາດັ່ງກ່າວມີດັ່ງນີ້:

- ປະເມີນນະໂຍບາຍທີ່ເໝາະສົມໃນການຮັບຮູ້ລາຍຮັບທີ່ຖືກນຳໃຊ້ໂດຍຜ່ານການສົມທຽບກັບມາດຕະຖານການບັນຊີ ແລະ ການປະຕິບັດຕາມອຸດສາຫະກຳທີ່ກ່ຽວຂ້ອງ ລວມທັງນະໂຍບາຍຮັບຮູ້ລາຍຮັບໃນກໍລະນີທີ່ຄາດວ່າບໍ່ສາມາດຮັບເງິນສົດໄດ້;
- ປະເມີນຂໍ້ສົມມຸດຖານທີ່ຖືກນຳໃຊ້ສຳລັບການຮັບຮູ້ເງິນແຮ;
- ປະເມີນຄວາມເໝາະສົມຂອງນະໂຍບາຍການຫັກເງິນແຮໜີ້ຕ້ອງຮັບຂອງລູກຄ້າຕາມຂໍ້ມູນປະຫວັດການຈ່າຍໜີ້ຕ້ອງຮັບຄືນໃນອະດີດ, ສິນເຊື່ອ, ການຮຽກເກັບຄືນໃໝ່ ແລະ ການສະສາງຂໍ້ມູນ;
- ປະເມີນຄວາມເໝາະສົມຂອງການເປີດເຜີຍຂໍ້ມູນກ່ຽວກັບໜີ້ຕ້ອງຮັບດັ່ງກ່າວ ແລະ ນະໂຍບາຍການຮັບຮູ້ລາຍຮັບ ແລະ ການຫັກເງິນແຮຕ້ອງຮັບຈາກລູກຄ້າ, ລວມທັງການປະເມີນການບັນທຶກລາຍຮັບ ແລະ ການປະເມີນຄວາມບໍ່ແນ່ນອນ ທີ່ມີສ່ວນໃນການບັນທຶກລາຍຮັບ ແລະ ເງິນແຮຂອງໜີ້ເສຍ;
- ປຽບທຽບນະໂຍບາຍການບັນຊີຂອງປີປະຈຸບັນ ແລະ ປີທີ່ຜ່ານມາ;
- ພິຈາລະນາທຸກການສະສາງທີ່ເກີດຂຶ້ນພາຍໃນປີ, ແລະ ກຳນົດຄວາມສ່ຽງທີ່ມີມູນຄ່າສູງກວ່າປົກກະຕິ ເຊິ່ງອາດຈະຊີ້ໃຫ້ເຫັນເຖິງຄວາມອາດສາມາດໃນການເກັບຄືນບໍ່ໄດ້; ແລະ
- ໄດ້ມີການກວດສອບການເກັບຄືນທີ່ສຳຄັນຂອງໜີ້ຕ້ອງຮັບຈົນມະນຸ້ລາຍງານການກວດສອບ.

ການດັດແກ້ເອກະສານລາຍງານການເງິນຂອງວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຕາມວິທີການບັນຊີພາຍໃຕ້ການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ

ກຸ່ມບໍລິສັດປະກອບມີ 2 ວິສະຫະກິດຂາຮຸ້ນ ແລະ 3 ບໍລິສັດຮຸ້ນສ່ວນ ໃນຈຳນວນ 8 ວິສະຫະກິດຂາຮຸ້ນ ແລະ 9 ບໍລິສັດຮຸ້ນສ່ວນ ຕາມທີ່ເປີດເຜີຍໃນ ບົດອະທິບາຍ 4.2 ແລະ 4.3 ຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ, ເຊິ່ງເອກະສານລາຍງານການເງິນຂອງວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ດັ່ງກ່າວແມ່ນຖືກກະກຽມຕາມມາດຕະຖານສາກົນດ້ານການລາຍງານທາງການເງິນ (IFRS). ສຳລັບການກະກຽມເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ, ທີ່ບໍລິສັດວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແມ່ນຖືກຮັບຮູ້ໂດຍການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ. ເອກະສານລາຍງານການເງິນຂອງວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແມ່ນໄດ້ຖືກດັດແກ້ຕາມຄວາມຈຳເປັນຕາມມາດຕະຖານສາກົນດ້ານການລາຍງານທາງການເງິນ (IFRS) ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີທີ່ກຸ່ມບໍລິສັດນຳໃຊ້ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ. ດັ່ງນັ້ນ, ພວກຂ້າພະເຈົ້າຖືວ່າຂະບວນການດັດແກ້ດັ່ງກ່າວເປັນເລື່ອງສຳຄັນໃນການກວດສອບ ເນື່ອງຈາກມີຄວາມຊັບຊ້ອນອັນເນື່ອງມາຈາກຄວາມແຕກຕ່າງທີ່ຫຼາກຫຼາຍລະຫວ່າງ IFRS ແລະ ນະໂຍບາຍການບັນຊີທີ່ກຸ່ມບໍລິສັດນຳມາໃຊ້ ແລະ ຂະບວນການດັດແກ້ກ່ຽວຂ້ອງກັບການໃຊ້ດຸນພິນິດ ແລະ ສົມມຸດຖານທີ່ສຳຄັນໂດຍຄະນະອຳນວຍການ.

ສ່ວນໜຶ່ງຂອງຂັ້ນຕອນໃນການກວດສອບຂອງພວກຂ້າພະເຈົ້ານອກເໜືອຈາກບັນດາຂັ້ນຕອນການກວດສອບອື່ນໆ, ພວກຂ້າພະເຈົ້າໄດ້ມີການທຳຄວາມເຂົ້າໃຈຂັ້ນຕອນຂອງຄະນະອຳນວຍການໃນການດັດແກ້ສ່ວນຕ່າງຈາກມາດຕະຖານສາກົນດ້ານການລາຍງານທາງການເງິນ (IFRS) ແລະ ນະໂຍບາຍການບັນຊີທີ່ນຳໃຊ້ໂດຍກຸ່ມບໍລິສັດ; ພວກຂ້າພະເຈົ້າຍັງໄດ້ທຳຄວາມເຂົ້າໃຈຂັ້ນຕອນການດັດແກ້ ແລະ ການຄວບຄຸມທີ່ວາງອອກໃນການດັດແກ້ເອກະສານລາຍງານການເງິນຂອງວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຈາກ IFRS ມາເປັນນະໂຍບາຍການບັນຊີຂອງກຸ່ມບໍລິສັດ, ແລະ ໄດ້ມີການກວດສອບບັນດາລາຍການດັດແກ້ທີ່ສຳຄັນ ແລະ ປະເມີນຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງການເປີດເຜີຍຂໍ້ມູນທີ່ກະກຽມໂດຍຄະນະອຳນວຍການໃນເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ. ກຸ່ມບໍລິສັດໄດ້ມີການເປີດເຜີຍນະໂຍບາຍການບັນຊີທີ່ກ່ຽວຂ້ອງໃນບົດອະທິບາຍເລກທີ 3, ແລະ ເປີດເຜີຍເພີ່ມເຕີມໃນບົດອະທິບາຍເລກທີ 4.2 ແລະ 4.3 ຕາມລຳດັບໃນເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ.

ຂໍ້ມູນອື່ນໆ

ຄະນະອຳນວຍການຂອງບໍລິສັດແມ່ນມີຄວາມຮັບຜິດຊອບຕໍ່ກັບຂໍ້ມູນອື່ນໆ. ຂໍ້ມູນອື່ນໆປະກອບມີຂໍ້ມູນທີ່ລວມຢູ່ໃນ ບົດລາຍງານປະຈຳປີ ແຕ່ບໍ່ໄດ້ລວມເອົາເອກະສານລາຍງານທາງການເງິນແບບສັງລວມ ແລະ ແບບແຍກກິດຈະການ ແລະ ບົດລາຍງານຂອງຜູ້ກວດສອບຂອງພວກຂ້າພະເຈົ້າ. ບົດລາຍງານປະຈຳປີ ຄາດຄະເນວ່າຈະສາມາດນຳໃຊ້ໄດ້ ຫຼັງຈາກມື້ທີ່ລະບຸໃນບົດລາຍງານຂອງຜູ້ກວດສອບ.

A member firm of Ernst & Young Global Limited

ຄວາມຄິດເຫັນຂອງພວກຂ້າພະເຈົ້າກ່ຽວກັບເອກະສານລາຍງານທາງດ້ານການເງິນ ບໍ່ໄດ້ກວມເອົາຂໍ້ມູນອື່ນໆ ແລະ ພວກຂ້າພະເຈົ້າຈະບໍ່ສະແດງຄຳເຫັນຕໍ່ກັບຂໍ້ມູນດັ່ງກ່າວ.

ກ່ຽວກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າມີຄວາມຮັບຜິດຊອບຕໍ່ການອ່ານຂໍ້ມູນອື່ນໆທີ່ກ່າວເຖິງຂ້າງເທິງ ຖ້າຫາກພິຈາລະນາວ່າມີຂໍ້ມູນອື່ນໆບໍ່ສອດຄ່ອງທີ່ສຳຄັນກັບເອກະສານລາຍງານການເງິນ ຫຼື ຂໍ້ມູນທີ່ໄດ້ຮັບໃນການກວດສອບ, ຫຼື ເປັນຂໍ້ຜິດພາດທີ່ສຳຄັນ. ຖ້າຫາກອີງຕາມຂັ້ນຕອນການກວດສອບທີ່ທາງພວກຂ້າພະເຈົ້າທີ່ໄດ້ປະຕິບັດ, ກໍລະນີທີ່ພວກຂ້າພະເຈົ້າສະຫຼຸບໄດ້ວ່າ ຫາກມີຂໍ້ຜິດພາດທີ່ສຳຄັນໃດກ່ຽວກັບຂໍ້ມູນອື່ນໆ, ພວກຂ້າພະເຈົ້າຕ້ອງໄດ້ລາຍງານບັນດາຂໍ້ຜິດພາດດັ່ງກ່າວຕາມຄວາມເປັນຈິງ. ພວກຂ້າພະເຈົ້າບໍ່ມີຂໍ້ຜິດພາດທີ່ສຳຄັນໃດທີ່ຈະຕ້ອງລາຍງານກ່ຽວກັບບັນຫານີ້.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ

ຄະນະອຳນວຍການຂອງກຸ່ມບໍລິສັດມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະຜູ້ບໍລິຫານເຫັນວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ, ຄະນະຜູ້ບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ລວມທັງການເປີດເຜີຍບັນຫາຕ່າງໆທີ່ກ່ຽວຂ້ອງກັບຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະຜູ້ບໍລິຫານບໍລິສັດຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະຜູ້ບໍລິຫານບໍລິສັດມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານການກວດສອບສາກົນ ISAs, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິດໄສແບບມືອາຊີບ ຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງໂດຍຄະນະຜູ້ບໍລິຫານ.

A member firm of Ernst & Young Global Limited

Building a better working world

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະຜູ້ບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນການສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.
- ເກັບກຳຫຼັກຖານການກວດສອບທີ່ເໝາະສົມຢ່າງພຽງພໍກ່ຽວກັບຂໍ້ມູນການເງິນຂອງຫົວໜ່ວຍທຸລະກິດ ຫຼື ການເຄື່ອນໄຫວທຸລະກິດພາຍໃນກຸ່ມບໍລິສັດ ເພື່ອສະແດງຄຳເຫັນຕໍ່ເອກະສານລາຍງານການເງິນແບບສັງລວມ. ພວກຂ້າພະເຈົ້າຮັບຜິດຊອບຕໍ່ທິດທາງ, ການຊີ້ນຳ ແລະ ການປະຕິບັດວຽກຂອງການກວດສອບກຸ່ມບໍລິສັດ. ພວກຂ້າພະເຈົ້າຍັງຄົງຮັບຜິດຊອບຕໍ່ກັບຄວາມຄິດເຫັນຂອງພວກຂ້າພະເຈົ້າພຽງແຕ່ຜູ້ດຽວ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຜູ້ມີອຳນາດໃນການຄວບຄຸມກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ລວມມີບັນດາຂໍ້ບົກພ່ອງທີ່ສຳຄັນຕ່າງໆກ່ຽວກັບການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າຍັງໄດ້ຈັດກຽມຄຳຖະແຫຼງການກັບຜູ້ມີອຳນາດໃນການຄວບຄຸມວ່າພວກຂ້າພະເຈົ້າໄດ້ປະຕິບັດຕາມຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບຄວາມເປັນເອກະລາດ ແລະ ເພື່ອປຶກສາຫາລືຕໍ່ກັບສາຍສຳພັນທັງໝົດ ແລະ ບັນຫາອື່ນໆທີ່ອາດຈະພິຈາລະນາຢ່າງສົມເຫດສົມຜົນວ່າຕ້ອງຄຳນຶງເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ມາດຕະການປ້ອງກັນທີ່ກ່ຽວຂ້ອງ.

ຈາກການປຶກສາຫາລືບັນຫາກັບຜູ້ມີອຳນາດໃນການຄວບຄຸມ ພວກຂ້າພະເຈົ້າໄດ້ພິຈາລະນາບັນຫາອື່ນທີ່ມີທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການຂອງປີປັດຈຸບັນ ແລະ ພວກຂ້າພະເຈົ້າໄດ້ອະທິບາຍບັນຫາເຫຼົ່ານີ້ໃນບົດລາຍງານຂອງນັກກວດສອບອິດສະຫຼະ ເວັ້ນແຕ່ມີກົດໝາຍ ຫຼື ຂໍ້ບັງຄັບໃນການຫ້າມເປີດເຜີຍກ່ຽວກັບບັນຫານີ້ຕໍ່ສາທາລະນະ ຫຼື ເມື່ອພວກຂ້າພະເຈົ້າພິຈາລະນາແລ້ວວ່າບໍ່ຄວນປຶກສາຫາລືບັນຫາດັ່ງກ່າວໃນບົດລາຍງານຂອງພວກຂ້າພະເຈົ້າ ເນື່ອງຈາກວ່າຜົນກະທົບຂອງການປຶກສາຫາລືບັນຫາດັ່ງກ່າວອາດຈະມີຫຼາຍກວ່າຜົນປະໂຫຍດທີ່ເປີດເຜີຍການປຶກສາຫາລືນີ້ຕໍ່ສາທາລະນະ.

ໃນນາມ ແລະ ຕາງໜ້າ ບໍລິສັດ ເອິນ ແອນ ຢັ່ງ ລາວ ຈຳກັດ

ກະຊວງ ການ ເງິນ ບໍລິສັດ ເອິນແອນຢັ່ງລາວ ຈຳກັດ Ernst & Young Lao Co.,Ltd ນະຄອນ ຫຼວງ ວຽງຈັນ

ອັນ ເລ
ຮຸ້ນສ່ວນ

ທະບຽນອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນ ເລກທີ 018/LCPAA-APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

A member firm of Ernst & Young Global Limited

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ
ນະວັນທີ 31 ທັນວາ 2024

	ບົດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		31 ທັນວາ 2024 ລ້ານກີບ	*31 ທັນວາ 2023 ລ້ານກີບ*	*31 ທັນວາ 2024 ລ້ານກີບ*	*31 ທັນວາ 2023 ລ້ານກີບ*
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ການລົງທຶນໃນ ບໍລິສັດໃນເຄືອ	4.1	-	-	378,321	541,241
ການລົງທຶນໃນ ວິສະຫະກິດຮ່ວມ	4.2	5,389,015	5,061,613	5,389,015	5,061,613
ການລົງທຶນໃນ ບໍລິສັດຮຸ້ນສ່ວນ	4.3	4,199,393	4,067,647	4,199,393	4,067,647
ການລົງທຶນອື່ນໆ	4.4	375,688	375,688	375,688	375,688
ເງິນລ່ວງໜ້າຊັບສິນພາຍໃຕ້ສັນຍາສຳປະທານ	5	1,973,407	1,973,407	1,980,432	1,980,432
ຊັບສິນບັດຄົງທີ່ມີຕົວຕົນ	6	7,701,842	8,111,267	7,648,328	7,931,699
ຊັບສິນບັດຄົງທີ່ບໍ່ມີຕົວຕົນ		132	568	127	562
ເງິນລ່ວງໜ້າໃຫ້ຜູ້ຮັບເໝົາໂຄງການກໍ່ສ້າງ	7	341,075	341,075	-	-
ຊັບສິນບໍ່ໝຸນວຽນອື່ນ		31,310	7,126	2,284	7,126
ລວມຊັບສິນບໍ່ໝຸນວຽນ		**20,011,862**	**19,938,391**	**19,973,588**	**19,966,008**
ຊັບສິນໝຸນວຽນ					
ເງິນສົດ	8	648,548	1,059,391	638,794	1,058,430
ການລົງທຶນໄລຍະສັ້ນ		-	61,563	-	61,563
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	9	1,189,748	1,749,478	1,237,252	1,735,280
ເຄື່ອງອາໄຫຼ່ ແລະ ອຸປະກອນ		3,104	2,795	3,104	2,795
ຊັບສິນໝຸນວຽນອື່ນໆ	10	7,696,183	9,309,316	7,694,156	9,336,524
ລວມຊັບສິນໝຸນວຽນ		**9,537,583**	**12,182,543**	**9,573,306**	**12,194,592**
ລວມຊັບສິນທັ້ງໝົດ		**29,549,445**	**32,120,934**	**29,546,894**	**32,160,600**

	ບົດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		31 ທັນວາ 2024 ລ້ານກີບ	31 ທັນວາ 2023 ລ້ານກີບ	31 ທັນວາ 2024 ລ້ານກີບ	31 ທັນວາ 2023 ລ້ານກີບ
ໜີ້ສິນ ແລະ ທຶນຂອງຜູ້ຖືຮຸ້ນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ໄລຍະຍາວ	11	32,168	45,318	32,168	45,318
ຮຸ້ນກູ້ທີ່ສັດສ່ວນໄລຍະຍາວ	12	11,994,844	13,827,294	11,994,844	13,827,294
ລວມໜີ້ສິນບໍ່ໝຸນວຽນ		**12,027,012**	**13,872,612**	**12,027,012**	**13,872,612**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງ ສິ່ງອື່ນໆ	13	4,725,373	818,625	4,707,189	860,493
ເງິນກູ້ຢືມໄລຍະຍາວທີ່ຈັດເປັນໄລຍະສັ້ນ	11	48,253	101,572	48,253	101,572
ເງິນກູ້ຢືມ-ໄລຍະສັ້ນ	11	828,547	1,486,770	828,547	1,486,770
ຮຸ້ນກູ້ທີ່ຈັດເປັນໄລຍະສັ້ນ	12	2,638,597	4,616,831	2,638,597	4,616,831
ລາຍຈ່າຍຄ້າງຈ່າຍ	14	556,639	676,093	543,225	661,345
ໜີ້ຕ້ອງສິ່ງ ສັນຍາ Swap		-	85,468	-	85,468
ໜີ້ສິນໝຸນວຽນອື່ນໆ		7,493	30,759	5,445	30,365
ລວມໜີ້ສິນໝຸນວຽນ		**8,804,902**	**7,816,118**	**8,771,256**	**7,842,844**
ລວມໜີ້ສິນທັງໝົດ		**20,831,914**	**21,688,730**	**20,798,268**	**21,715,456**
ທຶນຂອງຜູ້ຖືຮຸ້ນ					
ທຶນຈົດທະບຽນທີ່ຖອກແລ້ວ	15	6,717,215	6,717,215	6,717,215	6,717,215
ສ່ວນເພີ່ມມູນຄ່າຮຸ້ນ	15	985,621	985,621	985,621	985,621
ຄັງສຳຮອງຕາມລະບຽບການ		779,623	778,598	776,685	776,685
ດັດແກ້ຈາກການຕີມູນຄ່າ		474,482	468,988	474,482	468,988
(ຂາດທຶນສະສົມ)/ກຳໄລສະສົມ		(227,756)	1,483,786	(205,377)	1,496,635
ທຶນທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນ ຂອງບໍລິສັດ		**8,729,185**	**10,434,208**	**8,748,626**	**10,445,144**
ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ		(11,654)	(2,004)	-	-
ລວມທຶນທັງໝົດ		**8,717,531**	**10,432,204**	**8,748,626**	**10,445,144**
ລວມໜີ້ສິນ ແລະ ທຶນຂອງຜູ້ຖືຮຸ້ນ		**29,549,445**	**32,120,934**	**29,546,894**	**32,160,600**

ທ່ານ ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫ່ຍ ສາຍງານການເງິນ

31 ມີນາ 2025

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2024

	ບົດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		2024 ລ້ານກີບ	2023 ລ້ານກີບ	2024 ລ້ານກີບ	2023 ລ້ານກີບ
ລາຍຮັບຈາກການຂາຍໄຟຟ້າ ແລະ ການບໍລິການ	22	1,218,842	1,410,011	1,218,842	1,410,011
ຕົ້ນທຶນການຂາຍ ແລະ ການບໍລິການ	16	(655,601)	(693,656)	(655,601)	(693,656)
ກຳໄລຈາກການດຳເນີນງານ		**563,241**	**716,355**	**563,241**	**716,355**
ລາຍຮັບອື່ນໆ	17	153,451	462,865	93,130	421,388
ລາຍຈ່າຍການດຳເນີນງານ ແລະ ການບໍລິການ	18	(388,986)	(241,219)	(313,152)	(201,370)
ຂາດທຶນຈາກອັດຕາແລກປ່ຽນ		(2,381,086)	(2,077,036)	(2,391,221)	(2,083,838)
ສ່ວນແບ່ງກຳໄລຈາກການລົງທຶນໃນວິສະຫະກິດຂະຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		1,630,986	1,279,641	1,630,986	1,279,641
(ຂາດທຶນ)/ກຳໄລ ກ່ອນຕົ້ນທຶນທາງການເງິນ		**(422,394)**	**140,606**	**(417,016)**	**132,176**
ຕົ້ນທຶນທາງການເງິນ	19	(1,284,996)	(1,233,223)	(1,284,996)	(1,233,207)
ຂາດທຶນ-ກ່ອນລາຍຈ່າຍອາກອນກຳໄລ		**(1,707,390)**	**(1,092,617)**	**(1,702,012)**	**(1,101,031)**
ລາຍຈ່າຍອາກອນກຳໄລ	20	(3,127)	(1,119)	-	-
ຂາດທຶນ ພາຍໃນປີ		**(1,710,517)**	**(1,093,736)**	**(1,702,012)**	**(1,101,031)**
ຂາດທຶນ ທີ່ເກີດຈາກ:					
ບໍລິສັດທີ່ຄວບຄຸມໂດຍບໍລິສັດແມ່		(1,700,867)	(1,096,381)	(1,702,012)	(1,101,031)
ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ		(9,650)	2,645	-	-
		(1,710,517)	**(1,093,736)**	**(1,702,012)**	**(1,101,031)**
ກຳໄລຕໍ່ຮຸ້ນ					
ຂາດທຶນ-ພື້ນຖານຕໍ່ຮຸ້ນ (ກີບ)	21	(1,013)	(653)	(1,014)	(656)

ທ່ານ ສຸນາສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫ່ຍ ສາຍງານການເງິນ

31 ມີນາ 2025

ໃບລາຍງານສ່ວນປ່ຽນແປງທຶນຜູ້ຖືຮຸ້ນແບບສັງລວມ ແລະ ແບບແຍກກິດຈະການ
ນະວັນທີ 31 ທັນວາ 2024

	ແບບສັງລວມ							
	ບໍລິສັດທີ່ຄວບຄຸມໂດຍບໍລິສັດແມ່							
	ຮຸ້ນທີ່ຈົດທະບຽນ ແລະຖອກແລ້ວ ລ້ານກີບ	*ສ່ວນເພີ່ມມູນຄ່າ ຮຸ້ນ ລ້ານກີບ*	*ຄ້າງສຳຮອງຕາມ ລະບຽບການ ລ້ານກີບ*	*ຄ້າງສຳຮອງຈາກ ສ່ວນຕ່າງຂອງການ ຕີມູນຄ່າເງິນຕາ ຕ່າງປະເທດ ລ້ານກີບ*	*(ຂາດທຶນສະສົມ)/ ກຳໄລສະສົມ ລ້ານກີບ*	***ລວມ ລ້ານກີບ***	*ບໍລິສັດທີ່ບໍ່ໄດ້ ຄວບຄຸມໂດຍ ບໍລິສັດແມ່ ລ້ານກີບ*	***ລວມທຶນ ລ້ານກີບ***
ຍອດເຫຼືອນະວັນທີ 1 ມັງກອນ 2023	**6,717,215**	**985,621**	**776,685**	**443,608**	**2,667,088**	**11,590,217**	**(4,649)**	**11,585,568**
ກຳໄລສຸດທິພາຍໃນປີ	-	-	-	-	(1,096,381)	**(1,096,381)**	2,645	**(1,093,736)**
ຄັດແກ້ການຕີມູນຄ່າ	-	-	-	25,380	-	**25,380**	-	**25,380**
ຈ່າຍເງິນປັນຜົນ	-	-	-	-	(83,967)	**(83,967)**	-	**(83,967)**
ອາກອນເງິນປັນຜົນ	-	-	-	-	(1,041)	**(1,041)**	-	**(1,041)**
ສ່ວນເພີ່ມເງິນສຳຮອງຕາມລະບຽບການ	-	-	1,913	-	(1,913)	**-**	-	**-**
ຍອດເຫຼືອນະວັນທີ 31 ທັນວາ 2023	**6,717,215**	**985,621**	**778,598**	**468,988**	**1,483,786**	**10,434,208**	**(2,004)**	**10,432,204**
ຂາດທຶນພາຍໃນປີ	-	-	-	-	(1,710,517)	**(1,710,517)**	(9,650)	**(1,720,167)**
ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່	-	-	-	5,494	-	**5,494**	-	**5,494**
ໂອນເປັນເງິນສຳຮອງຕາມລະບຽບການ	-	-	1,025	-	(1,025)	**-**	-	**-**
ຍອດເຫຼືອນະວັນທີ 31 ທັນວາ 2024	**6,717,215**	**985,621**	**779,623**	**474,482**	**(227,756)**	**8,729,185**	**(11,654)**	**8,717,531**

ໃບລາຍງານສ່ວນປ່ຽນແປງທຶນຜູ້ຖືຮຸ້ນແບບສັງລວມ ແລະ ແບບແຍກກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2024

	ແບບແຍກກິດຈະການ					
	ຮຸ້ນທີ່ຈົດທະບຽນ ແລະຖອກແລ້ວ ລ້ານກີບ	*ສ່ວນເພີ່ມມູນຄ່າຮຸ້ນ ລ້ານກີບ*	*ຄັງສຳຮອງຕາມລະບຽບການ ລ້ານກີບ*	*ຄັງສຳຮອງຈາກສ່ວນຕ່າງຂອງການຕີ ມູນຄ່າເງິນຕາຕ່າງປະເທດ ລ້ານກີບ*	*(ຂາດທຶນສະສົມ)/ ກຳໄລສະສົມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2023	**6,717,215**	**985,621**	**776,685**	**443,608**	**2,681,633**	**11,604,762**
ຂາດທຶນພາຍໃນປີ	-	-	-	-	(1,101,031)	(1,101,031)
ດັດແກ້ການຕີມູນຄ່າ	-	-	-	25,380	-	25,380
ຈ່າຍເງິນປັນຜົນ	-	-	-	-	(83,967)	(83,967)
ຍອດເຫຼືອນະວັນທີ 31 ທັນວາ 2023	**6,717,215**	**985,621**	**776,685**	**468,988**	**1,496,635**	**10,445,144**
ຂາດທຶນພາຍໃນປີ	-	-	-	-	(1,702,012)	**(1,702,012)**
ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່	-	-	-	5,494	-	5,494
ຍອດເຫຼືອນະວັນທີ 31 ທັນວາ 2024	**6,717,215**	**985,621**	**776,685**	**474,482**	**(205,377)**	**8,748,626**

ທ່ານ ສຸກາສະໜາດ ໂສສຸພັນ
ຜູ້ອຳນວຍການໃຫຍ່
31 ມີນາ 2025

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫ່ຍ ສາຍງານການເງິນ

ໃບລາຍງານກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024

	ບົດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		2024 ລ້ານກີບ	2023 ລ້ານກີບ	2024 ລ້ານກີບ	2023 ລ້ານກີບ
ກິດຈະກຳການດຳເນີນງານ					
ຂາດທຶນ-ຫຼັງອາກອນ		**(1,710,517)**	**(1,093,736)**	**(1,702,012)**	**(1,101,031)**
ດັດແກ້ສຳລັບ:					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		537,828	572,767	536,518	572,086
ຄ່າເສື່ອມສຳລັບຕົ້ນທຶນການອອກຮຸ້ນກູ້		-	76,385	-	76,385
ຂາດທຶນຈາກການສະສາງຊັບສິນ,ທີ່ດິນ ແລະ ອຸປະກອນ		-	544	-	544
ກຳໄລຈາກການສະສາງການລົງທຶນໃນ ບໍລິສັດຮຸ້ນສ່ວນ ຫຼື ວິສະຫະກິດຂາຮຸ້ນ		-	(368,920)	-	(368,920)
ລາຍຮັບອື່ນໆ		-	(87,874)	-	(35,986)
ການຫັກເງິນແຮໜີ້ສິງໃສ		98,617	-	98,617	-
ລາຍຮັບດອກເບ້ຍ	17	(9,189)	(6,071)	(9,816)	(6,071)
ລາຍຈ່າຍການເງິນ	19	1,284,996	1,233,223	1,284,996	1,233,207
ລາຍຈ່າຍອາກອນກຳໄລ		3,127	1,119	-	-
ກຳໄລໃນຮຸ້ນຈາກການລົງທຶນ	4	(1,630,986)	(1,279,641)	(1,630,986)	(1,279,641)
ຂາດທຶນຈາກກິດຈະກຳການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**(1,426,124)**	**(952,203)**	**(1,422,683)**	**(909,427)**
ດັດແກ້ສຳລັບການປ່ຽນແປງເງິນລົງທຶນໝຸນວຽນ:					
ລາຍຈ່າຍລ່ວງໜ້າ		-	27,128	-	31,928
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		470,302	(1,065,049)	402,949	(1,050,937)
ຊັບສິນອື່ນໆ		1,753,116	1,754,535	1,808,658	1,673,013
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(424,544)	315,092	(458,618)	339,287
ໜີ້ສິນອື່ນໆ		193,486	(41,264)	205,536	(44,056)
ເງິນສົດທີ່ໄດ້ ຈາກກິດຈະກຳການດຳເນີນງານ		**566,236**	**38,239**	**531,842**	**39,808**
ຈ່າຍດອກເບ້ຍ		(1,333,249)	(1,196,408)	(1,333,249)	(1,196,408)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການດຳເນີນງານ		**(767,013)**	**(1,158,169)**	**(801,407)**	**(1,156,600)**

ໃບລາຍງານກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການ (ຕໍ່)
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024

	ບົດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		2024 ລ້ານກີບ	2023 ລ້ານກີບ	2024 ລ້ານກີບ	2023 ລ້ານກີບ
ກິດຈະກຳຈາກການລົງທຶນ					
ເງິນສົດຮັບຈາກເງິນຝາກຄົບກຳນົດ		61,563	-	61,563	-
ຊື້ຊັບສົມບັດພາຍໃຕ້ການສຳປະທານ		-	(348,116)	-	(348,116)
ຊື້ຊັບສົມບັດຄົງທີ່ບໍ່ມີຕົວຕົນ		-	(522)	-	(521)
ຮັບເງິນສົດຈາກການສະສາງ ຊັບສົມບັດຄົງທີ່		144,451	544	854	544
ເງິນສົດຮັບຈາກການຫຼຸດເງິນລົງທຶນໃນບໍລິສັດໃນເຄືອ		-	-	162,920	-
ຮັບເງິນປັນຜົນຈາກເງິນລົງທຶນໃນບໍລິສັດໃນເຄືອ		-	-	6,278	-
ຮັບເງິນລ່ວງໜ້າຈາກການຖອນການລົງທຶນ		4,055,748	-	4,055,748	-
ຮັບເງິນສົດຈາກການສະສາງໃນ ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		-	1,745,412	-	1,745,412
ລາຍຈ່າຍສຳລັບການລົງທຶນໃນວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		(3,484)	(9,403)	(3,484)	(9,403)
ຮັບເງິນປັນຜົນຈາກການລົງທຶນໃນວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		1,019,061	454,512	1,019,061	454,512
ກະແສເງິນສົດສຸດທິໄດ້ໃນກິດຈະກຳການລົງທຶນ		**5,277,339**	**1,842,427**	**5,302,940**	**1,842,428**
ກິດຈະກຳທາງການເງິນ					
ລາຍຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ		-	(41,143)	-	(41,143)
ຮັບເງິນສົດຈາກການກູ້ຢືມ		1,696,568	2,575,350	1,696,568	2,575,350
ຊຳລະເງິນກູ້ຢືມ		(1,774,276)	(1,337,569)	(1,774,276)	(1,337,569)
ຮັບເງິນສົດຈາກການອອກຮຸ້ນກູ້		-	2,176,726	-	2,176,726
ຊຳລະຮຸ້ນກູ້		(4,843,461)	(3,218,542)	(4,843,461)	(3,218,542)
ກະແສເງິນສົດສຸດທິທີ່(ໃຊ້)/ໄດ້ໃນກິດຈະກຳທາງການເງິນ		**(4,921,169)**	**154,822**	**(4,921,169)**	**154,822**

	ບົດ ອະທິບາຍ	*ແບບສັງລວມ*		*ແບບແຍກກິດຈະການ*	
		2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ເງິນສົດ ແລະ ທຽບເທົ່າເງິນສົດ ສຸດທິໝຸດລົງ		**(410,843)**	**839,080**	**(419,636)**	**840,651**
ເງິນສົດໃນຕົ້ນປີ		**1,059,391**	**220,311**	**1,058,430**	**217,779**
ເງິນສົດ ແລະ ລາຍການທຽບເທົ່າ ເງິນສົດທ້າຍປີ	**8**	**648,548**	**1,059,391**	**638,794**	**1,058,430**

ທ່ານ ສຸภาสะหาอาด ไสสุพัน
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫ່ຍ ສາຍງານການເງິນ

31 ມີນາ 2025

1. ຂໍ້ມູນບໍລິສັດ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ບໍລິສັດ"), ບໍລິສັດໃນເຄືອຂອງ ລັດວິສາຫະກິດ ໄຟຟ້າລາວ ("ຟຟລ"), ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ໄດ້ດຳເນີນກິດຈະການ ແລະ ຕັ້ງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນໂດຍ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 ("ວັນສ້າງຕັ້ງບໍລິສັດ") ເຊິ່ງໃບທະບຽນວິສາຫະກິດສະບັບປັບປຸງລ່າສຸດເລກທີ 1180/ຈວທ ລົງວັນທີ 8 ມິຖຸນາ 2022 ອອກໂດຍກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ.

ການຈົດທະບຽນຂອງບໍລິສັດໄດ້ເລີ່ມຈາກ ຟຟລ ເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດພະລັງງານຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະຂອງບໍລິສັດຕາມສຳນັກງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສນຍ, ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນ ໃນໂຮງງານໄຟຟ້າເອກະລາດ ("IPP") ໃຫ້ກັບບໍລິສັດ.

ໃນວັນທີ 15 ທັນວາ 2010, ວັນເລີ່ມດຳເນີນທຸລະກິດ, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້າ, ລວມມີ ເຂື່ອນນ້ຳງຶ່ມ 1, ເຂື່ອນນ້ຳເລີກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊລະບໍ ຕາມມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010 ໃຫ້ບໍລິສັດ ເປັນຈຳນວນເງິນ 2,605,792 ລ້ານກີບ. ຟຟລ ຈະສືບຕໍ່ດຳເນີນກິດຈະກຳຂອງຕົນໃນລະບົບສາຍສົ່ງ ແລະ ການກະຈາຍໄຟຟ້າທີ່ຜະລິດໂດຍຊັບສິນການຜະລິດທີ່ມີຢູ່ໄປເຖິງຜູ້ຊົມໃຊ້. ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າຂອງຕົນ ສ່ວນໃຫຍ່ແມ່ນຂຶ້ນກັບຊັບສິນການໂອນຍ້າຍດັ່ງກ່າວ ຈະສະໜອງໄຟຟ້າທີ່ຜະລິດກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນສັນຍາຊື້ - ຂາຍພະລັງງານ ("PPA").

ນອກຈາກນັ້ນ, ບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮຸ້ນສ່ວນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ສະຖານທີ່ຕັ້ງ ແລະ ເຄືອຂ່າຍ

ທີ່ຕັ້ງສຳນັກງານຂອງບໍລິສັດ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ. ນະວັນທີ 31 ທັນວາ 2024, ບໍລິສັດມີ ສອງ (2) ບໍລິສັດໃນເຄືອ, ແປດ (8) ວິສະຫະກິດຂາຮຸ້ນ, ເກົ້າ (9) ບໍລິສັດຮຸ້ນສ່ວນ, ເຊິ່ງບໍລິສັດທັງໝົດແມ່ນດຳເນີນທຸລະກິດຢູ່ ສປປ ລາວ.

ພະນັກງານ

ພະນັກງານທັງໝົດນະວັນທີ 31 ທັນວາ 2024 ແມ່ນມີ 1,021 ຄົນ (31 ທັນວາ 2023 ແມ່ນ 680 ຄົນ)

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2024, ບໍລິສັດມີ ສອງ (2) ບໍລິສັດໃນເຄືອ ເຊິ່ງໄດ້ສະຫຼຸບຂໍ້ມູນທາງການເງິນດັ່ງລຸ່ມນີ້:

ຊື່	*ເລກທີໃບທະບຽນວິສາຫະກິດ*	*ຂະແໜງທຸລະກິດ*	*% ຖືຮຸ້ນ ໂດຍ ຜ-ຟຟລ*
ບໍລິສັດ ນ້ຳປີ ພາວເວີ ຈຳກັດ	050-15/ຜ.ກທ	ຜະລິດໄຟຟ້າ	80
ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີແອວ-ເຈັນ ຈຳກັດຜູ້ດຽວ	1216/ຈວທ	ບໍລິການ ການບຳລຸງຮັກສາ	100

1. ຂໍ້ມູນບໍລິສັດ (ຕໍ່)

ວິສະຫະກິດຂາຮຸ້ນ

ນະວັນທີ 31 ທັນວາ 2024, ບໍລິສັດມີ ແປດ (8) ວິສະຫະກິດຂາຮຸ້ນ ເຊິ່ງໄດ້ສະຫຼຸບຂໍ້ມູນທາງການເງິນດັ່ງລຸ່ມນີ້:

ຊື່	*ຊື່*	*ເລກທີ່ໃບທະບຽນວິສາຫະກິດ*	*ຂະແໜງທຸລະກິດ*	*% ຖືຮຸ້ນໂດຍ*
ບໍລິສັດ ໄຟຟ້ານ້ຳງຶ່ມ 2 ຈຳກັດ	ນ້ຳງຶ່ມ 2	ເລກທີ 0861/ຈວທ, ລົງວັນທີ 22 ມິຖຸນາ 2020 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	25
ບໍລິສັດ ໄຟຟ້ານ້ຳດີກ 1-2 ຈຳກັດ	ນ້ຳລີກ 1-2	ເລກທີ 0527/ຈວທ, ລົງວັນທີ 26 ເມສາ 2018 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	10
ບໍລິສັດ ໄຟຟ້ານ້ຳງຶ່ມ 5 ຈຳກັດ	ນ້ຳງຶ່ມ 5	ເລກທີ 0569/ຈວທ, ລົງວັນທີ 18 ເມສາ 2019 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	15
ບໍລິສັດ ໄຟຟ້ານ້ຳແຢ່ງ ຈຳກັດ	ນ້ຳແຢ່ງ	ເລກທີ 087/ຈວທ, ລົງວັນທີ 17 ຕຸລາ 2012 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	10
ບໍລິສັດ ໄຟຟ້ານ້ຳເລອງ ຈຳກັດ	ນ້ຳເລອງ	ເລກທີ 087-12/ຈວທ, ລົງວັນທີ 17 ຕຸລາ 2012 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	20
ບໍລິສັດ ໄຟຟ້າໄຊຍະບຸລີ ຈຳກັດ	ໄຊຍະບຸລີ	ເລກທີ 1608/ຈວທ, ລົງວັນທີ 5 ຕຸລາ 2021 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	20
ບໍລິສັດ ໄຟຟ້ານ້ຳມັງ 1 ຈຳກັດ	ນ້ຳມັງ 1	ເລກທີ 0566/ຈວທ, ລົງວັນທີ 5 ເມສາ 2021 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	10
ບໍລິສັດ ໄຟຟ້ານ້ຳຫາ 1 ຈຳກັດ	ນ້ຳຫາ	ເລກທີ 0477/ຈວທ, ລົງວັນທີ 25 ກຸມພາ 2022 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	20

ບໍລິສັດຮຸ້ນສ່ວນ

ນະວັນທີ 31 ທັນວາ 2024, ບໍລິສັດມີ ເກົ້າ (9) ບໍລິສັດຮຸ້ນສ່ວນ ເຊິ່ງໄດ້ສະຫຼຸບຂໍ້ມູນທາງການເງິນດັ່ງລຸ່ມນີ້:

ຊື່	*ຊື່*	*ເລກທີ່ໃບທະບຽນວິສາຫະກິດ*	*ຂະແໜງທຸລະກິດ*	*% ຖືຮຸ້ນໂດຍ*
ບໍລິສັດ ເຫີນ-ຫີນບຸນ ພາວເວີ ຈຳກັດ	ເຫີນ-ຫີນບຸນ	ເລກທີ 0596/ຈວທ, ລົງວັນທີ 5 ກໍລະກົດ 2017 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	60
ບໍລິສັດ ໄຟຟ້າ ຫ້ວຍເຫາະ ຈຳກັດ	ຫ້ວຍເຫາະ	ເລກທີ 0461/ຈວທ, ລົງວັນທີ 20 ສິງຫາ 2013 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	20
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ	ຫ້ວຍລຳພັນຕອນລຸ່ມ	ເລກທີ 024/ຈວທ, ລົງວັນທີ 15 ມີນາ 2018 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	60
ບໍລິສັດ ໄຟຟ້ານ້ຳດີກ 1 ຈຳກັດ	ນ້ຳດີກ 1	ເລກທີ 1800/ຈວທ, ລົງວັນທີ 21 ມິຖຸນາ 2023 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	70
ບໍລິສັດ ນ້ຳພຸນ ພາວເວີ ຈຳກັດ	ນ້ຳພຸນ	ເລກທີ 027-16/ຜກທ, ລົງວັນທີ 30 ພຶດສະພາ 2016 ໂດຍກະຊວງແຜນການ ແລະ ການລົງທຶນ	ຜະລິດໄຟຟ້າ	51
ບໍລິສັດ ອີແອນອີ ເອັນຈີເນຍຣິ່ງ ແອນ ເຊີວິສ ຈຳກັດ	ອີແອນອີ	ເລກທີ 1059/ຈວທ, ລົງວັນທີ 15 ພະຈິກ 2018 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການບຳລຸງຮັກສາ	60
ບໍລິສັດ EDL Gen RED ຈຳກັດ	EDL Gen RED	ເລກທີ 0771/ຈວທ, ລົງວັນທີ 21 ພຶດສະພາ 2019 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການ	80
ບໍລິສັດ ໄຟຟ້າ ນ້ຳເຫີນ 1 ຈຳກັດ	ນ້ຳເຫີນ 1	ເລກທີ 0786/ຈວທ, ລົງວັນທີ 22 ມີນາ 2023 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຜະລິດໄຟຟ້າ	15
ບໍລິສັດ ນ້ຳລີກ 1 ຈຳກັດ	ນ້ຳລີກ 1	ເລກທີ 027-16/ຜກທ, ລົງວັນທີ 25 ມີນາ 2016 ໂດຍກະຊວງແຜນການ ແລະ ການລົງທຶນ	ຜະລິດໄຟຟ້າ	10

2. ພື້ນຖານໃນການກະກຽມ

2.1 *ພື້ນຖານໃນການກະກຽມ*

ອີງຕາມກົດໝາຍບັນຊີ ເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດທີ່ມີຜົນປະໂຫຍດສາທາລະນະ, ລວມທັງ ບໍລິສັດຈົດທະບຽນ ຕ້ອງໄດ້ຈັດຕັ້ງປະຕິບັດ ແລະ ນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ໃນການ ກະກຽມເອກະສານລາຍງານການເງິນຂອງຕົນ ໂດຍໃຫ້ເລີ່ມປະຕິບັດຕັ້ງແຕ່ປີ 2017 ເປັນຕົ້ນໄປ. ອີງຕາມໜັງສືແຈ້ງການ ຂອງກະຊວງການເງິນ ເລກທີ 1137/ກງ ລົງວັນທີ 27 ເມສາ 2020, ເຫັນດີໃຫ້ບໍລິສັດທີ່ຮັບໃຊ້ປະໂຫຍດສາທາລະນະ ສາມາດເລື່ອນການຈັດຕັ້ງປະຕິບັດ ແລະ ນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ຈົນເຖິງວັນທີ 1 ມັງກອນ 2026 ເປັນຕົ້ນໄປ. ປະຈຸບັນຄະນະຜູ້ບໍລິຫານຂອງກຸ່ມບໍລິສັດແມ່ນກຳລັງກະກຽມແຜນການໃນການຈັດຕັ້ງປະຕິບັດ ມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ຕາມການແຈ້ງການ ສະບັບດັ່ງກ່າວ.

ສຳລັບປີສິ້ນສຸດວັນທີ 31 ທັນວາ 2024, ບໍລິສັດໄດ້ກະກຽມ ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກ ກິດຈະການຂອງບໍລິສັດ (ເອົ້າລວມແມ່ນ "ເອກະສານລາຍງານການເງິນ") ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບ ນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີວັດຖຸປະສົງໃນການນຳ ສະເໜີໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ, ໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ແລະ ກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການຂອງກຸ່ມບໍລິສັດ/ບໍລິສັດ ຕາມ ຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນແບບສັງລວມ ຂອງບໍລິສັດ ແລະ ບັນດາບໍລິສັດໃນເຄືອ ("ກຸ່ມບໍລິສັດ") ແລະ ເອກະສານລາຍງານ ການເງິນແຍກກິດຈະການ ແມ່ນຖືກກະກຽມດ້ວຍຮູບແບບມູນຄ່າເດີມ.

ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ແມ່ນຖືກກະກຽມເພື່ອຊ່ວຍບໍລິສັດສະໜອງໃນ ການລາຍງານໃຫ້ແກ່ຜູ້ຖືຮຸ້ນ. ດັ່ງນັ້ນ, ເອກະສານລາຍງານການເງິນແບບສັງລວມ ແລະ ແບບກິດຈະການອາດຈະບໍ່ເໝາະເໝ າະກັບຈຸດປະສົງອື່ນໆ ແລະ ຈະບໍ່ຖືກແຈກຢາຍ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ຄວາມສົບເນື່ອງໃນການດຳເນີນທຸລະກິດ

ບໍລິສັດຂາດທຶນສຸດທິ 1,702,012 ລ້ານກີບ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024. ແລະ ນະວັນທີ ວັນທີ 31 ທັນວາ 2024 ບໍລິສັດມີຂາດທຶນສະສົມ 205,377 ລ້ານກີບ ແລະ ໜີ້ສິນໝຸນວຽນ 8,771,256 ລ້ານກີບ ເຊິ່ງຫຼາຍກວ່າຊັບສິນ ໝຸນວຽນ (ເຊິ່ງບໍ່ລວມຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ 7,644,729 ລ້ານກີບ) ຈຳນວນ 6,842,679 ລ້ານກີບ.

ກຸ່ມບໍລິສັດຂາດທຶນສຸດທິ 1,710,517 ລ້ານກີບ ສຳລັບປີສິ້ນສຸດ ວັນທີ ວັນທີ 31 ທັນວາ 2024. ແລະ ນະວັນທີ ວັນທີ 31 ທັນວາ 2024, ກຸ່ມບໍລິສັດມີຂາດທຶນສະສົມ 227,756 ລ້ານກີບ ແລະ ໜີ້ສິນໝຸນວຽນ 8,804,902 ລ້ານກີບ ເຊິ່ງຫຼາຍກວ່າ ຊັບສິນໝຸນວຽນ (ຊຶ່ງບໍ່ລວມຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ 7,644,729 ລ້ານກີບ) ຈຳນວນ 6,912,048 ລ້ານ ກີບ.

ໜາດການດັ່ງກ່າວເປັນຕົວຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດຈະເຮັດໃຫ້ເກີດຂໍ້ສົງໄສກ່ຽວກັບຄວາມສາມາດໃນການ ສືບຕໍ່ດຳເນີນທຸລະກິດຕາມຄວາມສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ/ກຸ່ມບໍລິສັດ. ດ້ວຍເຫດນີ້, ຄວາມສາມາດໃນ ການສືບຕໍ່ດຳເນີນທຸລະກິດຂອງກຸ່ມບໍລິສັດແມ່ນໄດ້ມາຈາກກະແສເງິນສົດຈາກການດຳເນີນງານໃນອະນາຄົດ ແລະ/ຫຼື ການ ໄດ້ຮັບການຊຸກຍູ້ທາງການເງິນຈາກເຈົ້າຂອງບໍລິສັດ.

2. ພື້ນຖານໃນການກະກຽມ (ຕໍ່)

2.1 *ພື້ນຖານໃນການກະກຽມ* (ຕໍ່)

ຄະນະຜູ້ບໍລິຫານຂອງກຸ່ມບໍລິສັດໄດ້ກະກຽມແຜນການທຸລະກິດ ແລະ ການເງິນທີ່ເໝາະສົມເພື່ອການດຳເນີນງານຂອງ ບໍລິສັດ. ນອກຈາກນັ້ນ, ລັດວິສາຫະກິດໄຟຟ້າລາວເປັນຜູ້ຖືຮຸ້ນໃຫຍ່ຂອງ ຜ-ຟຟລ, ຍັງໄດ້ໃຫ້ການຢັ້ງຢືນວ່າມີຄວາມເຕັມໃຈ ແລະ ຄວາມສາມາດໃນການສະໜອງເງິນທຶນທີ່ພຽງພໍໃຫ້ແກ່ກຸ່ມບໍລິສັດເພື່ອສືບຕໍ່ການດຳເນີນງານພາຍໃນ 12 ເດືອນຂ້າງ ໜ້າຖ້າຈຳເປັນ. ພາຍໃຕ້ພື້ນຖານນີ້, ຄະນະຜູ້ບໍລິຫານຂອງກຸ່ມບໍລິສັດໄດ້ພິຈາລະນາເຖິງຄວາມເໝາະສົມສຳລັບການກະກຽມ ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການບົນພື້ນຖານຄວາມສົມເຫດສົມຜົນໃນການດຳເນີນທຸລະ ກິດ.

2.2 *ປີການບັນຊີ*

ປີການບັນຊີຂອງກຸ່ມບໍລິສັດແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

2.3 *ສະກຸນເງິນການບັນຊີ*

ກຸ່ມບໍລິສັດນຳໃຊ້ການບັນທຶກບັນຊີເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ໃຊ້ໃນການດຳເນີນທຸລະກຳ ຂອງກຸ່ມບໍລິສັດ. ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການຂອງກຸ່ມບໍລິສັດແມ່ນຖືກນຳສະເໜີ ເປັນຫົວໜ່ວຍລ້ານກີບ ("ລ້ານກີບ").

2.4 *ພື້ນຖານການສັງລວມ*

ບໍລິສັດໃນເຄືອແມ່ນໄດ້ຖືກສັງລວມຂໍ້ມູນທັງໝົດນັບຈາກມື້ທີ່ໄດ້ມາຂອງຂໍ້ມູນ, ເປັນມື້ທີ່ກຸ່ມບໍລິສັດຢູ່ພາຍໃຕ້ການຄວບຄຸມ ແລະ ສືບຕໍ່ສັງລວມຈົນເຖິງມື້ທີ່ສິ້ນສຸດການຄວບຄຸມ.

ເອກະສານລາຍງານການເງິນຂອງບໍລິສັດໃນເຄືອແມ່ນຖືກກະກຽມພາຍໃຕ້ປີການບັນຊີອັນດຽວກັນກັບບໍລິສັດແມ່, ໂດຍການ ນຳໃຊ້ນະໂຍບາຍການບັນຊີທີ່ສອດຄ່ອງກັນ.

ຍອດເຫຼືອພາຍໃນກຸ່ມບໍລິສັດທັງໝົດ, ລາຍຮັບ ແລະ ລາຍຈ່າຍ ແລະ ກຳໄລ ຫຼື ຂາດທຶນທີ່ຍັງບໍ່ທັນເກີດຂຶ້ນຈິງ ທີ່ມີຜົນຈາກ ລາຍການທີ່ກ່ຽວຂ້ອງກັນພາຍໃນກຸ່ມແມ່ນຈະຖືກຕັດອອກທັງໝົດ.

ບໍລິສັດທີ່ບໍ່ໄດ້ຖືກຄວບຄຸມໂດຍບໍລິສັດແມ່ແມ່ນຈະນຳສະເໜີຜົນກຳໄລ/ຂາດທຶນ ແລະ ຊັບສິນສຸດທິທີ່ບໍ່ໄດ້ຖືໂດຍກຸ່ມ ບໍລິສັດ ແລະ ຈະຖືກນຳສະເໜີແຍກຈາກໃບລາຍງານຜົນໄດ້ຮັບແບບສັງລວມ ແລະ ທຶນໃນໃບລາຍງານຖານະການເງິນ ສັງລວມ, ແຍກຈາກສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດແມ່.

ຜົນກະທົບຈາກສ່ວນປ່ຽນແປງຄວາມເປັນເຈົ້າຂອງໃນບໍລິສັດໃນເຄືອໂດຍທີ່ບໍ່ໄດ້ສູນເສຍການຄວບຄຸມແມ່ນຈະຖືກບັນທຶກ ເປັນທຸລະກຳຂອງກິດຈະການ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ

3.1 ທຸລະກຳເງິນຕາຕ່າງປະເທດ

ເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການສຳລັບປີ ແມ່ນຖືກສະເໜີໂດຍສະກຸນເງິນກີບ ເຊິ່ງເປັນສະກຸນເງິນດຽວກັນກັບສະກຸນເງິນການບັນຊີຂອງບໍລິສັດ.

ອີງຕາມໜັງສື ເລກທີ 306/ກບຊ, ລົງວັນທີ 4 ພຶດສະພາ 2020 ອອກໂດຍກົມບັນຊີ ກະຊວງການເງິນ, ກຸ່ມບໍລິສັດໄດ້ຮັບການອະນຸມັດນະໂຍບາຍດ້ານການບັນຊີທີ່ກ່ຽວກັບທຸລະກຳທີ່ເປັນເງິນຕາຕ່າງປະເທດຕາມຂ້າງລຸ່ມນີ້.

ທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນຈະຖືກແປງຄ່າເປັນສະກຸນເງິນກີບດ້ວຍອັດຕາແລກປ່ຽນຂອງວັນທີ່ທຸລະກຳເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທີ່ເປັນຕົວເງິນສະແດງມູນຄ່າເປັນເງິນຕາຕ່າງປະເທດແມ່ນຖືກແປງຄ່າເປັນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນ ນະວັນທີລາຍງານ.

ຊັບສິນ ແລະ ໜີ້ສິນທີ່ເປັນຕົວເງິນ

- ຊັບສິນ ແລະ ໜີ້ສິນຢູ່ໃນໃບລາຍງານຖານະການເງິນແມ່ນສະເໜີ ແລະ ຖືກແປງຄ່າໂດຍອັດຕາແລກປ່ຽນທ້າຍມື້ຂອງໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ;
- ສ່ວນຕ່າງທັງໝົດຈາກອັດຕາແລກປ່ຽນທີ່ຍັງບໍ່ທັນເກີດຂຶ້ນຈິງແມ່ນຮັບຮູ້ໃນຈຳນວນສຸດທິ ຂອງບັນດາຊັບສິນໝຸນວຽນອື່ນ ຫຼື ໜີ້ສິນໝຸນວຽນອື່ນໃນໃບລາຍງານຖານະການເງິນຈົນກວ່າຈະເກີດຂຶ້ນຈິງໃນປີຕໍ່ໄປ;
- ກຳໄລ/ຂາດທຶນທີ່ເກີດຂຶ້ນຈິງຈາກອັດຕາແລກປ່ຽນ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການເມື່ອມີການຊຳລະ.

ສຳລັບ ວິສະຫະກິດຂາຮຸ້ນ, ບໍລິສັດຮຸ້ນສ່ວນ ແລະ ບໍລິສັດໃນເຄືອ, ຜົນການດຳເນີນງານ ແລະ ຖານະທາງການເງິນຂອງບໍລິສັດດັ່ງກ່າວ ທີ່ມີການນຳສະເໜີສະກຸນເງິນທີ່ແຕກຕ່າງຈາກສະກຸນເງິນທີ່ສະເໜີຂອງບໍລິສັດ ແມ່ນຈະຖືກແປງເປັນສະກຸນເງິນນຳສະເໜີດັ່ງນີ້:

- ຊັບສິນ ແລະ ໜີ້ສິນຢູ່ໃນໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການແມ່ນສະແດງ ແລະ ຖືກແປງຄ່າໂດຍອັດຕາແລກປ່ຽນທ້າຍງວດຂອງໃບລາຍງານຖານະການເງິນ ແລະ;
- ລາຍຮັບ ແລະ ຄ່າໃຊ້ຈ່າຍໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ຖືກແປງຄ່າໂດຍໃຊ້ອັດຕາແລກປ່ຽນສະເລ່ຍໃນປີ ແລະ;
- ຜົນຕ່າງຕ່າງທັງໝົດຈາກການແປງຄ່າທີ່ຍັງບໍ່ເກີດຂຶ້ນຈິງແມ່ນຮັບຮູ້ໃນສ່ວນປ່ຽນແປງຂອງທຶນແບບສັງລວມ ແລະ ແບບແຍກກິດຈະການ.

3.2 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດປະກອບດ້ວຍເງິນສົດໃນຄັງ, ແຊັກ, ເງິນຝາກຢູ່ທະນາຄານ ແລະ ເງິນຝາກໃນທະນາຄານອື່ນ ແລະ ເງິນຝາກໄລຍະສັ້ນອື່ນໆ ທີ່ມີສະພາບຄ່ອງສູງໂດຍມີໄລຍະເວລາໜ້ອຍກວ່າ 3 ເດືອນນັບຈາກວັນທີ່ຮັບຮູ້.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.3 ເຄື່ອງໃນສາງ

ເຄື່ອງໃນສາງແມ່ນລວມເອົາ ອາໄຫຼ່ ແລະ ເຄື່ອງໃນສາງ, ໂດຍການນັບເອົາມູນຄ່າຕ່ຳສຸດຂອງຕົ້ນທຶນສິນຄ້າ ແລະ ມູນຄ່າສຸດທິທີ່ຄາດວ່າຈະໄດ້ຮັບຄືນ. ການຄິດໄລ່ຕົ້ນທຶນສິນຄ້າແມ່ນໄດ້ກຳນົດໂດຍວິທີການຕີມູນຄ່າສະເລ່ຍແບບຖ່ວງໜັກ. ຕົ້ນທຶນຊື້ປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງຂອງການໄດ້ມາຂອງເຄື່ອງໃນສາງນັ້ນເຊັ່ນ: ຄ່າຂົນສົ່ງ, ຫັກສ່ວນຫຼຸດທີ່ໄດ້ຮັບ, ເງິນອຸດໜຸນ ແລະ ສ່ວນຫຼຸດອື່ນໆ. ມູນຄ່າສິນຄ້າສຸດທິແມ່ນລາຄາໂດຍເຄື່ອງໃນສາງສາມາດຮັບຮູ້ໄດ້ຕາມເຫດການໂດຍທົ່ວໄປຂອງທຸລະກິດ, ຫຼັງການອະນຸຍາດໃຫ້ມີຕົ້ນທຶນການຜະລິດ.

ເງິນແຮສຳລັບຄວາມລ້າສະໄໝຂອງເຄື່ອງໃນສາງ

ເງິນແຮຂອງເຄື່ອງໃນສາງແມ່ນສ້າງເພື່ອການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ ແລະ ອື່ນໆ) ຂອງເຄື່ອງໃນສາງຂອງບໍລິສັດ ອີງຕາມຫຼັກຖານທີ່ສົມເຫດສົມຜົນຂອງການເສື່ອມມູນຄ່າທີ່ເຫັນໄດ້ໃນມື້ລາຍງານ.

ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງຍອດເຫຼືອເງິນແຮແມ່ນຖືກບັນທຶກໃນໃບລາຍງາຍຜົນໄດ້ຮັບແບບສັງລວມ ແລະ ແບບແຍກກິດຈະການ.

3.4 ໜີ້ຕ້ອງຮັບ

ໜີ້ຕ້ອງຮັບແມ່ນໄດ້ສະແດງໃນເອກະສານລາຍງານການເງິນຕາມມູນຄ່າໜີ້ຄ້າງຮັບຈາກລູກຄ້າ ແລະ ໜີ້ຄ້າງຮັບອື່ນໆ ຫຼັງການຫັກເງິນແຮສຳລັບໜີ້ເສຍ.

ເງິນແຮສຳລັບໜີ້ເສຍ

ເງິນແຮສຳລັບໜີ້ເສຍແມ່ນຖືກກຳນົດໂດຍການຕັດສິນໃຈຂອງຜູ້ບໍລິຫານໂດຍອີງຕາມປະຫວັດການສູນເສຍທີ່ຜ່ານມາ. ສຳລັບຍອດເຫຼືອເງິນທີ່ຄ້າງຊຳລະເກີນ 3 ເດືອນຂຶ້ນໄປ (ຍົກເວັ້ນອີງກອນຂອງລັດຖະບານ), ການບໍລິການທີ່ຕິດພັນກັບລູກຄ້າຈະຖືກຢຸດຊົ່ວ ແລະ ໜີ້ຕ້ອງຮັບຈະລຶບລ້າງອອກເມື່ອມີການຕັດສິນໃຈຢ່າງເປັນທາງການຈາກຄະນະຜູ້ບໍລິຫານ.

3.5 ຊັບສິນບັດຄົງທີ່ມີຕົວຕົນ

ຊັບສິນບັດຄົງທີ່ມີຕົວຕົນສ່ວນໃຫຍ່ປະກອບມີ: ອາຄານ, ເຂື່ອນໄຟຟ້າ, ໂຮງງານ ແລະ ເຄື່ອງຈັກ ແມ່ນສະແດງຢູ່ໃນມູນຄ່າສຸດທິຂອງບັນຊີໃນວັນທີ ໂອນຈາກ ຟຟລ ແລະ ຕົ້ນທຶນເດີ່ມຂອງຊັບສິນທີ່ໄດ້ມາຫຼັງວັນທີ 15 ທັນວາ 2010. ຕົ້ນທຶນຂອງຊັບສິນບັດຄົງທີ່ຈະລວມເຖິງຄ່າໃຊ້ຈ່າຍໃນການໄດ້ມາຂອງລາຍການຊັບສິນນັ້ນ.

ການຮັບຮູ້

ຕົ້ນທຶນຂອງຊັບສິນບັດຄົງທີ່ຈະລວມເຖິງຄ່າໃຊ້ຈ່າຍໃນການໄດ້ມາຂອງຊັບສິນນັ້ນ. ຄ່າໃຊ້ຈ່າຍຂອງຊັບສິນທີ່ສ້າງຂຶ້ນເອງປະກອບມີຄ່າໃຊ້ຈ່າຍຂອງວັດສະດຸ ແລະ ຄ່າແຮງງານທາງກົງ, ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ ເພື່ອໃຫ້ຊັບສິນຢູ່ໃນສະພາບພ້ອມນຳໃຊ້. ສິດໃນການນຳໃຊ້ຊັບສິນບັດຄົງທີ່ ຈະຖືກໂອນໃຫ້ລັດຖະບານ ແຫ່ງ ສປປ ລາວ ເມື່ອສັນຍາທີ່ກ່ຽວຂ້ອງ ທັງໝົດໄດ້ຮັບການຕີກລົງເຫັນດີຮ່ວມກັນ ແລະ ສະເໜີຕໍ່ພະແນກຊັບພະຍາກອນພະລັງງານ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.5 ຊັບສິນບັດຄົງທີ່ມີຕົວຕົນ (ຕໍ່)

ອີງຕາມສັນຍາສຳປະທານ, ກຸ່ມບໍລິສັດຈະຕ້ອງໂອນຊັບສິນທັງໝົດຂອງການດຳເນີນງານໂຄງການ ຕາມທີ່ກຳນົດໄວ້ໃນສັນຍາສຳປະທານ ຂອງກຸ່ມບໍລິສັດ ໃຫ້ກັບລັດຖະບານລາວ ເມື່ອສິ້ນສຸດໄລຍະເວລາສຳປະທານ.

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈະຖືກລວມໄວ້ໃນມູນຄ່າຕາມບັນຊີຕາມຄວາມເໝາະສົມ, ເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດທາງເສດຖະກິດໃນອານາຄົດ ທີ່ກ່ຽວຂ້ອງກັບຊັບສິນ ແລະ ສາມາດວັດມູນຄ່າຢ່າງໜ້າເຊື່ອຖືໄດ້. ມູນຄ່າຂອງຊັບສິນທີ່ຖືກປ່ຽນຈະຖືກສະສາງອອກ. ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນໄດ້ບັນທຶກໄວ້ໃນໃບລາຍງານຜົນໄດ້ຮັບໃນໄລຍະຮອບເວລາບັນຊີທີ່ເກີດຂຶ້ນ.

ຊັບສິນບັດຄົງທີ່ມີຕົວຕົນແມ່ນສະແດງຢູ່ໃນຕົ້ນທຶນຫັກລົບກັບຄ່າຫຼ້ຍຫ້ຽນສະສົມ. ຄ່າຫຼ້ຍຫ້ຽນແມ່ນຖືກຄິດໄລ່ຕາມຫຼັກການເສັ້ນຊື່ຕໍ່ອາຍຸການນຳໃຊ້ທີ່ຄາດໄວ້ ແຕ່ບໍ່ເກີນໄລຍະເວລາສຳປະທານຕາມສັນຍາສຳປະທານທີ່ກ່ຽວຂ້ອງ ເຊິ່ງແມ່ນ 30 ປີ. ອັດຕາປະຈຳປີທີ່ນຳໃຊ້ສຳລັບຈຸດປະສົງຕາມປະເພດຂອງຊັບສິນໄດ້ກຳນົດໄວ້ຂ້າງລຸ່ມນີ້:

	ປີ
ອາຄານ (ອາຄານຫ້ອງການ, ການປັບປຸງການກໍ່ສ້າງລວມທັງຫ້ອງການສາຂາ)	4 - 30
ເຂື່ອນໄຟຟ້າ	19 - 30
ເຄື່ອງຈັກ ແລະ ອຸປະກອນ (ລວມທັງເຄື່ອງຈັກໄຟຟ້າທີ່ໃຊ້ຢູ່ໃນເຂື່ອນໄຟຟ້າ ແລະ ຕາຂ່າຍສາຍສົ່ງ ແລະ ກະຈາຍໄຟຟ້າ)	2 - 30
ພາຫະນະ	5
ເຄື່ອງໃຊ້ຫ້ອງການ	3 - 10

ກຸ່ມບໍລິສັດຈະບັນທຶກຄ່າຫຼ້ຍຫ້ຽນເປັນຄ່າໃຊ້ຈ່າຍຕາມໄລຍະເວລາ. ເມື່ອຊັບສິນໄລຍະຍາວຖືກເກັບຄືນ, ກຸ່ມບໍລິສັດຈະຕ້ອງໄດ້ສະສາງຊັບສິນ ແລະ ຄ່າຫຼ້ຍຫ້ຽນສະສົມທີ່ກ່ຽວຂ້ອງຈາກບັນຊີ ແລະ ຮັບຮູ້ເປັນກຳໄລ ຫຼື ການຂາດທຶນຈາກການເກັບຄືນຂອງຊັບສິນໃນລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ.

ມູນຄ່າຄົງເຫຼືອ ຈະຖືກສະສາງອອກທັນທີ ໃຫ້ມີມູນຄ່າເທົ່າກັບມູນຄ່າທີ່ຄາດວ່າຈະໄດ້ຮັບຄືນ ຖ້າມູນຄ່າຄົງເຫຼືອຫຼາຍກວ່າມູນຄ່າທີ່ຄາດວ່າຈະໄດ້ຮັບ.

ກຳໄລ ຫຼື ຂາດທຶນຈາກການຂາຍແມ່ນຖືກກຳນົດໂດຍການປຽບທຽບລາຍໄດ້ກັບມູນຄ່າຕາມບັນຊີ ແລະ ຖືກຮັບຮູ້ໃນ '(ຂາດທຶນ)/ກຳໄລ ອື່ນໆ - ສຸດທິ' ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ.

3.6 ຊັບສິນຕາມສັນຍາເຊົ່າ

ການກຳນົດການຈັດຫາ ຫຼື ປະກອບມີສັນຍາເຊົ່າແມ່ນອີງຕາມເນື້ອໃນຂອງການຈັດຫາ ນະວັນທີ່ເລີ່ມຕົ້ນສັນຍາ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າປະຕິບັດຕາມການຈັດຫາແມ່ນຂຶ້ນກັບການນຳໃຊ້ຊັບສິນສະເພາະ ແລະ ການຈັດຫາສິດໃນການນຳໃຊ້ຊັບສິນ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.6 *ຊັບສິນຕາມສັນຍາເຊົ່າ* (ຕໍ່)

ສັນຍາເຊົ່າແມ່ນຈັດປະເພດເປັນສັນຍາເຊົ່າທາງການເງິນເມື່ອເງື່ອນໄຂຂອງສັນຍາເຊົ່າມີການໂອນຄວາມສ່ຽງທັງໝົດ ແລະ ຜົນຕອບແທນຂອງເຈົ້າຂອງຊັບສິນທີ່ໃຫ້ເຊົ່າ. ສັນຍາເຊົ່າອື່ນໆທັງໝົດແມ່ນຈັດປະເພດເປັນສັນຍາເຊົ່າການດຳເນີນງານ.

ເມື່ອກຸ່ມບໍລິສັດເປັນຜູ້ເຊົ່າ

ຊັບສິນທີ່ຢູ່ພາຍໃຕ້ການໃຫ້ສັນຍາເຊົ່າທາງການເງິນ ແມ່ນຮັບຮູ້ເປັນຊັບສິນໃນໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ ນະມື້ເລີ່ມຕົ້ນຂອງສັນຍາເຊົ່າ ຕາມມູນຄ່າຍຸຕິທຳຂອງຊັບສິນສັນຍາເຊົ່າ ຫຼື ຖ້າຕ່ຳກວ່າ, ອີງຕາມມູນຄ່າປັດຈຸບັນສຸດທິຂອງການຊຳລະຄ່າເຊົ່າຕ່ຳສຸດ. ມູນຄ່າຕົ້ນທຶນ ລວມທັງການຊຳລະຕາມສັນຍາເຊົ່າໃນອາຄົດ ພາຍໃຕ້ສັນຍາເຊົ່າທາງການເງິນແມ່ນຖືກບັນທຶກເປັນໜີ້ສິນ. ມູນຄ່າດອກເບ້ຍທີ່ລວມຢູ່ໃນການຊຳລະສັນຍາເຊົ່າ ແມ່ນຄິດໄລ່ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການຕາມໄລຍະເວລາເຊົ່າ ເພື່ອໃຫ້ໄດ້ອັດຕາດອກເບ້ຍຕາມມູນຄ່າທີ່ຍັງເຫຼືອຂອງໜີ້ສິນຕາມສັນຍາເຊົ່າທາງການເງິນ. ການຮັບຮູ້ຊັບສິນຕາມສັນຍາເຊົ່າທາງການເງິນແມ່ນ ຄິດໄລ່ຄ່າເສື່ອມມູນຄ່າໂດຍການນຳໃຊ້ວິທີເສັ້ນຊື່ ຕາມການປະເມີນໄລຍະທີ່ສັ້ນກວ່າຂອງອາຍຸການນຳໃຊ້ຂອງຊັບສິນ ແລະ ໄລຍະເວລາຂອງສັນຍາເຊົ່າ , ຖ້າບໍ່ມີຄວາມແນ່ນອນຢ່າງສົມເຫດສົມຜົນ, ກຸ່ມບໍລິສັດຈະຮັບເອົາກຳມະສິດໂດຍມື້ສິ້ນສຸດຂອງໄລຍະເວລາຂອງສັນຍາເຊົ່າ.

ຄ່າເຊົ່າພາຍໃຕ້ສັນຍາເຊົ່າການດຳເນີນງານແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ໂດຍການໃຊ້ວິທີເສັ້ນຊື່ຕາມໄລຍະເວລາສັນຍາເຊົ່າ.

ເມື່ອກຸ່ມບໍລິສັດເປັນຜູ້ໃຫ້ເຊົ່າ

ສັນຍາເຊົ່າທີ່ກຸ່ມບໍລິສັດບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຈາກຄວາມເປັນເຈົ້າຂອງຊັບສິນໃຫ້ຈັດເປັນສັນຍາເຊົ່າດ້ານການດຳເນີນງານ. ລາຍຮັບຄ່າເຊົ່າແມ່ນບັນທຶກເປັນລາຍຮັບທີ່ອີງຕາມເງື່ອນໄຂສັນຍາຂອງລາຍຮັບຄ່າເຊົ່າ. ຕົ້ນທຶນໂດຍກົງເບື້ອງຕົ້ນເກີດໃນການເຈລະຈາສັນຍາເຊົ່າການດຳເນີນງານໄດ້ຖືກເພີ່ມເປັນມູນຄ່າຕາມບັນຊີຂອງຊັບສິນສັນຍາເຊົ່າ ແລະ ໄດ້ຖືກຮັບຮູ້ຕາມເງື່ອນຕາມໄລຍະສັນຍາເຊົ່າເຊິ່ງຄ້າຍຄືກັບລາຍຮັບຄ່າເຊົ່າ. ສຳລັບຄ່າເຊົ່າບັ້ງເອີນແມ່ນໄດ້ຮັບຮູ້ເປັນລາຍຮັບຕາມໄລຍະເວລາທີ່ພວກເຂົາມີລາຍຮັບ.

3.7 *ເງິນກູ້ຢືມ*

ເງິນກູ້ຢືມຖືກຮັບຮູ້ຕາມມູນຄ່າທີ່ໄດ້ຮັບຕົວຈິງ, ບວກກັບຕົ້ນທຶນທີ່ຕິດພັນກັບເງິນກູ້, ຖ້າມີ.

ເງິນກູ້ຢືມແມ່ນຖືກຈັດປະເພດເປັນໜີ້ສິນໝຸນວຽນ ຍົກເວັ້ນກຸ່ມບໍລິສັດບໍ່ມີເງື່ອນໄຂໃນການເລື່ອນການຊຳລະໜີ້ໃນໄລຍະເວລາຢ່າງໜ້ອຍ 12 ເດືອນ ຫຼັງການສິ້ນສຸດປີລາຍງານ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.8 *ລາຍຈ່າຍລ່ວງໜ້າ*

ລາຍຈ່າຍຈ່າຍລ່ວງໜ້າຈະລາຍງານເປັນລາຍຈ່າຍລ່ວງໜ້າໄລຍະສັ້ນ ຫຼື ໄລຍະຍາວໃນເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ແລະ ໃຫ້ຫັກຄ່າເສື່ອມມູນຄ່າຕາມໄລຍະເວລາທີ່ຊໍ້າລະ ຫຼື ໄລຍະເວລາທີ່ເກີດຜົນປະໂຫຍດທາງດ້ານເສດຖະກິດທີ່ກ່ຽວຂ້ອງກັບຄ່າໃຊ້ຈ່າຍເຫຼົ່ານີ້.

ລາຍຈ່າຍປະເພດຕ່າງໆເຫຼົ່ານີ້ແມ່ນຖືກບັນທຶກເປັນລາຍຈ່າຍລ່ວງໜ້າໄລຍະຍາວ ແລະ ຫັກຄ່າເສື່ອມມູນຄ່າໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບຍກກິດຈະການ.

3.9 *ການສັງລວມທຸລະກິດ ແລະ ຄ່ານິຍົມ*

ການສັງລວມທຸລະກິດທີ່ກ່ຽວຂ້ອງກັບທຸລະກິດພາຍໃຕ້ການຄວບຄຸມຮ່ວມກັນ

ການສັງລວມທຸລະກິດທີ່ກ່ຽວຂ້ອງກັບຫົວໜ່ວຍທຸລະກິດທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ແມ່ນການສັງລວມບັນດາຫົວໜ່ວຍທຸລະກິດ ຫຼື ກິດຈະການສຸດທ້າຍຖືກຄວບຄຸມໂດຍພາກສ່ວນດຽວ ຫຼື ພາກສ່ວນດຽວກັນທັງກ່ອນ ແລະ ຫຼັງຈາກການສັງລວມທຸລະກິດ, ແລະ ການຄວບຄຸມນັ້ນບໍ່ແມ່ນການຄວບຄຸມຊົ່ວຄາວ.

ການສັງລວມທຸລະກິດທີ່ກ່ຽວຂ້ອງກັບຫົວໜ່ວຍທຸລະກິດພາຍໃຕ້ການຄວບຄຸມຮ່ວມກັນແມ່ນໄດ້ສະແດງລາຍລະອຽດດັ່ງຕໍ່ໄປນີ້:

- ຊັບສິນ ແລະ ໜີ້ສິນຂອງສອງຫົວໜ່ວຍທຸລະກິດລວມແມ່ນສະແດງຢູ່ໃນຍອດມູນຄ່າຕາມບັນຊີໃນວັນທີທີ່ສັງລວມທຸລະກິດ;
- ບໍ່ມີການຮັບຮູ້ຄ່ານິຍົມຈາກການສັງລວມທຸລະກິດ;
- ໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ສະທ້ອນເຖິງຜົນລັບຂອງການສັງລວມທຸລະກິດນັບແຕ່ມື້ທີ່ສັງລວມທຸລະກິດກັນ; ແລະ
- ຜົນຕ່າງລະຫວ່າງຜົນຕອບແທນຂອງການຈ່າຍ ແລະ ຊັບສິນສຸດທິຂອງຜູ້ຊື້ຈະຖືກບັນທຶກໄວ້ໃນສ່ວນຂອງຜູ້ຖືຮຸ້ນ.

3.10 *ການບັນຊີສຳລັບກຸ່ມບໍລິສັດ – ການລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຮ່ວມ, ບໍລິສັດຮຸ້ນສ່ວນ*

3.10.1 *ບໍລິສັດໃນເຄືອ*

ບໍລິສັດໃນເຄືອແມ່ນຫົວໜ່ວຍທຸລະກິດທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງກຸ່ມບໍລິສັດມີອຳນາດຄວບຄຸມກິດຈະການ. ກຸ່ມບໍລິສັດຈະຄວບຄຸມເມື່ອມີການຖືກເປີດເຜີຍ ຫຼື ມີສິດທີ່ຈະປ່ຽນແປງຜົນຕອບແທນ. ບໍລິສັດໃນເຄືອແມ່ນຖືກສັງລວມເຂົ້າກັນຢ່າງຄົບຖ້ວນຕັ້ງແຕ່ມື້ທີ່ຖືກໂອນໃຫ້ກຸ່ມບໍລິສັດ ໃນເອກະສານລາຍງານການເງິນສັງລວມ. ບັນດາບໍລິສັດໃນເຄືອແມ່ນຈະຖືກແຍກອອກຈາກກັນ ນັບຈາກມື້ທີ່ການຄວບຄຸມສິ້ນສຸດ.

ທຸລະກຳລະຫວ່າງບໍລິສັດ, ຍອດຄົງເຫຼືອ ແລະ ກຳໄລ ຫຼື ຂາດທຶນທີ່ບໍ່ໄດ້ຮັບຮູ້ໃນທຸລະກຳລະຫວ່າງກຸ່ມບໍລິສັດແມ່ນຈະຖືກລົບລ້າງ. ບັນຊີລາຍຊື່ຂອງບໍລິສັດໃນເຄືອແມ່ນສະແດງຢູ່ໃນປົດອະທິບາຍເລກທີ 4.1.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.10 ການບັນຊີສຳລັບກຸ່ມບໍລິສັດ – ການລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ, ບໍລິສັດຮຸ້ນສ່ວນ (ຕໍ່)

3.10.2 ວິສະຫະກິດຂາຮຸ້ນ

ວິສະຫະກິດຂາຮຸ້ນແມ່ນຫົວໜ່ວຍທຸລະກິດທັງໝົດທີ່ກຸ່ມບໍລິສັດອຳນາດຢ່າງມີສາລະສຳຄັນ ແຕ່ບໍ່ສາມາດຄວບຄຸມ ຫຼື ຮ່ວມຄວບຄຸມ. ການລົງທຶນໃນວິສະຫະກິດຂາຮຸ້ນແມ່ນນຳໃຊ້ວິທີການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ. ພາຍໃຕ້ວິທີການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ, ການລົງທຶນໃນວິສະຫະກິດຂາຮຸ້ນແມ່ນໄດ້ຮັບການຮັບຮູ້ໃນເບື້ອງຕົ້ນດ້ວຍຕົ້ນທຶນ. ບັນຊີລາຍຊື່ຂອງວິສະຫະກິດຂາຮຸ້ນຂອງບໍລິສັດແມ່ນຖືກກຳນົດໄວ້ໃນບົດອະທິບາຍເລກທີ 4.2.

3.10.3 ບໍລິສັດຮຸ້ນສ່ວນ

ການລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນກຸ່ມບໍລິສັດຮ່ວມກັນຄວບຄຸມ, ແຕ່ບໍ່ສາມາດຄວບຄຸມແບບເດັດຂາດແຕ່ພຽງຜູ້ດຽວ. ການລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນນຳໃຊ້ວິທີການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ. ພາຍໃຕ້ວິທີການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ, ການລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນໄດ້ຮັບການຮັບຮູ້ໃນເບື້ອງຕົ້ນດ້ວຍຕົ້ນທຶນ. ບັນຊີລາຍຊື່ຂອງບໍລິສັດຮຸ້ນສ່ວນແມ່ນກຳນົດໄວ້ໃນບົດອະທິບາຍເລກທີ 4.3.

3.10.4 ວິທີການບັນຊີພາຍໃຕ້ການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ

ພາຍໃຕ້ການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ, ການລົງທຶນໃນວິສະຫະກິດຂາຮຸ້ນ ແລະ ການລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນນຳໃຊ້ການບັນຊີຄິດໄລ່ກຳໄລຕາມສັດສ່ວນຮຸ້ນ. ພາຍໃຕ້ວິທີການນີ້ ສ່ວນແບ່ງຂອງກຳໄລ ຫຼື ຂາດທຶນ ຂອງບໍລິສັດຮຸ້ນສ່ວນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ. ການປ່ຽນແປງພາຍຫຼັງແມ່ນຈະປັບປຸງກັບມູນຄ່າຕາມບັນຊີຂອງເງິນລົງທຶນ. ເມື່ອມີການຂາດທຶນຂອງສ່ວນແບ່ງກຳໄລຂອງກຸ່ມບໍລິສັດ ທີ່ມີມູນຄ່າຫຼາຍກວ່າ ຫຼື ເທົ່າກັບມູນຄ່າເງິນລົງທຶນໃນວິສະຫະກິດຂາຮຸ້ນ ແລະ ການລົງທຶນໃນບໍລິສັດຮຸ້ນສ່ວນ, ກຸ່ມບໍລິສັດຈະບໍ່ໄດ້ຮັບຮູ້ຜົນຂາດທຶນທີ່ເກີດຂຶ້ນ ຍົກເວັ້ນເສຍແຕ່ກຸ່ມບໍລິສັດມີພັນທະ ຫຼື ຕ້ອງຊຳລະເງິນແທນ ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ. ນະໂຍບາຍການບັນຊີຂອງວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ມີການປ່ຽນແປງເມື່ອເຫັນວ່າມີຄວາມຈຳເປັນ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງກຸ່ມບໍລິສັດ.

3.10.5 ເອກະສານລາຍງານການເງິນແຍກກິດຈະການ

ໃນເອກະສານລາຍງານການເງິນແບບແຍກກິດຈະການ ເງິນລົງທຶນໃນບໍລິສັດໃນເຄືອ ແມ່ນນຳໃຊ້ວິທີຄິດໄລ່ແບບມູນຄ່າຕົ້ນທຶນ. ເງິນລົງທຶນໃນວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແມ່ນຄິດໄລ່ຕາມກຳໄລຕາມສັດສ່ວນຮຸ້ນ.

3.10.6 ເງິນລົງທຶນທົ່ວໄປ

ເງິນລົງທຶນນອກເໜືອຈາກ ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ, ບໍລິສັດຮຸ້ນສ່ວນ ແລະ ເງິນລົງທຶນທີ່ບໍ່ໄດ້ມີຢູ່ໃນຄວາມຕ້ອງການຂອງຕະຫຼາດ ແມ່ນຈະຖືກຈັດປະເພດໃຫ້ເປັນເງິນລົງທຶນທົ່ວໄປ. ເງິນລົງທຶນຈະຖືກຮັບຮູ້ໃນເບື້ອງຕົ້ນ ແລະ ຕໍ່ມາ ເປັນມູນຄ່າຕົ້ນທຶນເດີມ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.11 ເງິນລົງທຶນໄລຍະສັ້ນ

ເງິນລົງທຶນໄລຍະສັ້ນເປັນເງິນລົງທຶນທີ່ຖືໄວ້ຈົນຄົບກຳນົດໂດຍບັນທຶກບັນຊີຕາມມູນຄ່າທາງບັນຊີ ແລະ ດອກເບ້ຍແມ່ນຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການຕາມທີ່ໄດ້ລະບຸໃນຂໍ້ຕົກລົງທີ່ກ່ຽວຂ້ອງ.

3.12 ໜີ້ຕ້ອງສົ່ງທາງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງທາງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ ຖືກຮັບຮູ້ຕາມຈຳນວນຕາມຈຳນວນທີ່ຕ້ອງຈ່າຍຄືນໃນອະນາຄົດສຳລັບ ສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າຈະຖືກຮຽກເກັບເງິນຈາກກຸ່ມບໍລິສັດ ຫຼື ບໍ່ກໍ່ຕາມ.

3.13 ເງິນຮ

ເງິນຮຖືກຮັບຮູ້ ເມື່ອກຸ່ມບໍລິສັດມີພາລະຜູກພັນໃນປັດຈຸບັນ (ທາງກົດໝາຍ ຫຼື ທາງອື່ນໆ) ເຊິ່ງເກີດຈາກເຫດການຜ່ານມາ, ອາດເປັນໄປໄດ້ວ່າການໄຫຼອອກຂອງຊັບພະຍາກອນທີ່ມີມູນຄ່າທາງເສດຖະກິດ ເພື່ອຊຳລະພາລະຜູກພັນ ແລະ ຈຳນວນເງິນຂອງພາລະຜູກພັນທີ່ສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້.

3.14 ຮຸ້ນກູ້

ຮຸ້ນກູ້ແມ່ນໄດ້ອອກຈຳໜ່າຍຕາມມູນຄ່າກຳນົດ ແລະ ຮຸ້ນກູ້ຈະຖືກຮັບຮູ້ຕາມມູນຄ່າກຳນົດໂດຍການຫັກຕົ້ນທຶນການຈັດຈຳໜ່າຍ. ຫຼັງຈາກນັ້ນ, ຮຸ້ນກູ້ຈະຖືກຮັບຮູ້ຕາມມູນຄ່າຕົ້ນທຶນຫັກທົດແທນ, ສ່ວນຕ່າງລະຫວ່າງຜົນຕອບແທນ (ຫັກດ້ວຍຕົ້ນທຶນການດຳເນີນການ) ແລະ ມູນຄ່າໄຖ່ຖອນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ ຕະຫຼອດໄລຍະເວລາຂອງການກູ້ຢືມ ໂດຍນຳໃຊ້ວິທີອັດຕາຜົນຕອບແທນທີ່ແທ້ຈິງ.

ຕົ້ນທຶນໃນການອອກຮຸ້ນກູ້ ເປັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການອອກຮຸ້ນກູ້ໂດຍກົງ ເຊິ່ງລວມຄ່າທີ່ປຶກສາທາງການເງິນ, ຄ່າທີ່ປຶກສາທາງກົດໝາຍ ແລະ ຄ່າທຳນຽມຕ່າງໆ. ຄ່າໃຊ້ຈ່າຍເຫຼົ່ານີ້ແມ່ນໄດ້ບັນທຶກໃນບັນຊີຊັບສິນລໍຖ້າສະສາງ ແລະ ຈະສະສາງ ແລະ ຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບສັງລວມ ແລະ ແບບແຍກກິດຈະການໂດຍອີງຕາມອາຍຸຂອງຮຸ້ນກູ້.

ຮຸ້ນກູ້ແມ່ນຖືກຈັດປະເພດເປັນໜີ້ສິນໝຸນວຽນ ຍົກເວັ້ນກຸ່ມບໍລິສັດບໍ່ມີເງື່ອນໄຂໃນການເລື່ອນການຊຳລະໜີ້ ຈະສາມາດເລື່ອນການຊຳລະໜີ້ອອກໄປອີກ ໃນໄລຍະເວລາຢ່າງໜ້ອຍ 12 ເດືອນ ນັບແຕ່ມື້ສິ້ນສຸດການລາຍງານ.

3.15 ການອນຸພັນ

ສັນຍາແລກປ່ຽນເງິນຕາຕ່າງປະເທດ

ນະມື້ເລີ່ມຕົ້ນ, ຈຳນວນເງິນຕົ້ນໃນການເຮັດທຸລະກຳແລກປ່ຽນເງິນຕາຕ່າງປະເທດແມ່ນບັນທຶກເປັນສັນຍາແລກປ່ຽນຂອງໜີ້ຕ້ອງຮັບໂດຍການນຳໃຊ້ອັດຕາແລກປ່ຽນທັນທີ ແລະ ສັນຍາແລກປ່ຽນຂອງໜີ້ຕ້ອງສົ່ງແມ່ນໃຊ້ອັດຕາແລກປ່ຽນຕາມການຕົກລົງກັນໃນຂໍ້ຕົກລົງການແລກປ່ຽນ. ໂດຍສ່ວນຕ່າງຈະສະແດງເປັນສ່ວນເກີນ ຫຼື ສ່ວນຫຼຸດໃນໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ, ເຊິ່ງຈະຄິດໄລ່ຄ່າເສື່ອມໃນໃບລາຍງານຜົນການດຳເນີນງານໂດຍນຳໃຊ້ວິທີເສັ້ນຊື່ ຕະຫຼອດໄລຍະເວລາຂອງສັນຍາ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.15 ການສານອານຸພັນ *(ຕໍ່)*

ສັນຍາແລກປ່ຽນເງິນຕາຕ່າງປະເທດ (ຕໍ່)

ນອກຈາກນີ້, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງແມ່ນຈະປ່ຽນເປັນເງິນກີບໂດຍການນຳໃຊ້ອັດຕາແລກປ່ຽນພາຍໃນມື້ລາຍງານ. ເຊິ່ງສ່ວນຕ່າງຂອງການແລກປ່ຽນແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ.

ມູນຄ່າສຸດທິຂອງສັນຍາແລກປ່ຽນຂອງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງແມ່ນໄດ້ສະແດງໃນໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການສຳລັບປີ.

ມູນຄ່າດອກເບ້ຍໃນສັນຍາອັດຕາດອກເບ້ຍແມ່ນບັນທຶກເປັນມູນຄ່າສຸດທິຂອງ ໃບລາຍງານຜົນການດຳເນີນງານສັງລວມ ຂອງສັນຍາແລກປ່ຽນໜີ້ຕ້ອງຮັບໄດ້ນຳໃຊ້ອັດຕາດອກເບ້ຍຄົງທີ່ສຳລັບເງິນບາດ ແລະ ສັນຍາແລກປ່ຽນໜີ້ຕ້ອງສິ່ງແມ່ນນຳໃຊ້ອັດຕາດອກເບ້ຍຄົງທີ່ສຳລັບເງິນໂດລາສາຫະລັດ ຕາມການຕົກລົງໃນຂໍ້ຕົກລົງສັນຍາເມື່ອມີການຈ່າຍດອກເບ້ຍ.

3.16 ການຮັບຮູ້ລາຍຮັບ

ລາຍຮັບສ່ວນໃຫຍ່ແມ່ນປະກອບດ້ວຍລາຍຮັບຈາກການຂາຍໄຟຟ້າ ແລະ ການບໍລິການ ເຊິ່ງລວມຄ່າທຳນຽມການຕິດຕັ້ງ ແລະ ລາຍຮັບເງິນປັນຜົນ.

ການຂາຍໄຟຟ້າ

ບັນຊີກຸ່ມບໍລິສັດສຳລັບການຂາຍໃນເວລາທີ່:

- ມີສັນຍາຊື້-ຂາຍໄຟຟ້າລາວ ("PPA");
- ການສົ່ງກະແສໄຟຟ້າ;
- ລາຄາປະລິມານໄດ້ຮັບການສ້າງຕັ້ງຂຶ້ນ ຫຼື ສາມາດໄດ້ຮັບການກຳນົດ;
- ລາຍຮັບທີ່ກ່ຽວຂ້ອງແມ່ນຈະໄດ້ຮັບການຟື້ນຟູ.

ການສົ່ງໃຊ້ເວລາສະຖານທີ່ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດທີ່ກ່ຽວຂ້ອງກັບການເປັນເຈົ້າຂອງໄດ້ຖືກໂອນໃຫ້ກັບຜູ້ຊື້. ໂດຍທົ່ວໄປ ລາຍຮັບຈາກການຂາຍກະແສໄຟຟ້າຄິດໄລ່ຈາກໜ້ວຍໄຟໃນຈຸດນຳສົ່ງຄູນອັດຕາທີ່ຕົກລົງກັນ ແລະ ກຳນົດໃນສັນຍາຊື້ກະແສໄຟຟ້າ.

ການບໍລິການອື່ນໆ

ການບໍລິການອື່ນໆ ໂດຍສ່ວນໃຫຍ່ແລ້ວປະກອບມີ ຄ່າທຳນຽມຕິດຕັ້ງ, ເຊິ່ງຈະລົງບັນຊີຮັບຮູ້ ເມື່ອການບໍລິການສຳເລັດ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.16 ການຮັບຮູ້ລາຍຮັບ (ຕໍ່)

ລາຍຮັບຈາກການບໍລິການຄຸ້ມຄອງ ແລະ ບຳລຸງຮັກສາເຂື່ອນໃຫ້ເຂື່ອນ

ລາຍຮັບຈາກການບໍລິການຄຸ້ມຄອງ ແລະ ບຳລຸງຮັກສາເຂື່ອນໃຫ້ເຂື່ອນໄດ້ຖືກຮັບຮູ້ (ລາຍຮັບອື່ນໆ) ເມື່ອການບໍລິການສຳເລັດ ແລະໄດ້ຖືກອະນຸມັດຈາກລູກຄ້າ, ໂດຍທົ່ວໄປ, ລາຍຮັບຈະຖືກຮັບຮູ້ເມື່ອການບໍລິການໃດໜຶ່ງສຳເລັດການໃຫ້ບໍລິການ ແລະ ຖືກມອບໃຫ້ລູກຄ້າ.

ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ການລົງບັນຊີເມື່ອເກີດສິດໃນການຮັບເງິນປັນຜົນ, ເຊິ່ງໂດຍປົກກະຕິແລ້ວຈະມີການຮັບຮູ້ ເມື່ອຜູ້ຖືຮຸ້ນມີສິດຈະໄດ້ຮັບການຊຳລະ.

3.17 ຜົນປະໂຫຍດຂອງພະນັກງານ

ເງິນເຄຣສຳລັບຜົນປະໂຫຍດຂອງພະນັກງານ ແມ່ນບໍ່ໄດ້ຕັ້ງໄວ້ໃນແຕ່ລະປີ. ໜີ້ສິນໄດ້ຖືກຮັບຮູ້ໄວ້ໃນໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ ແລະ ລາຍຈ່າຍທີ່ກ່ຽວຂ້ອງບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບອີງຕາມຈຳນວນຕົວຈິງ. ຈຳນວນເງິນເຫຼົ່ານີ້ຈະຖືກຈ່າຍໃນເວລາທີ່ພະນັກງານລາອອກ ຫຼື ອອກບຳນານ.

ພັນທະຕໍ່ເງິນຜົນປະໂຫຍດອື່ນໆຂອງພະນັກງານ

ກຸ່ມບໍລິສັດມີເງິນຜົນປະໂຫຍດອື່ນໆໃຫ້ແກ່ພະນັກງານເຊັ່ນ ກອງທຶນປະກັນສັງຄົມຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ກຸ່ມ ບໍລິສັດຍັງໄດ້ມີຜົນປະໂຫຍດໃຫ້ພະນັກງານເຊັ່ນໂບນັດປະຈຳປີ.

ກຸ່ມບໍລິສັດຮັບຮູ້ລາຍຈ່າຍ ແລະ ໜີ້ສິນທີ່ກ່ຽວຂ້ອງກັບເງິນຜົນປະໂຫຍດຂອງພະນັກງານ ເມື່ອມີລາຍຈ່າຍ ແລະ ໜີ້ສິນເກີດຂຶ້ນ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.18 ອາກອນ

ກຸ່ມບໍລິສັດບັນທຶກອາກອນກຳໄລປັນພື້ນຖານການຄ້າງຊຳລະ ແລະ ມູນຄ່າສຸດທິ. ກຸ່ມບໍລິສັດຈະບໍ່ຮັບຮູ້ໜີ້ຕ້ອງສົ່ງ ຫຼື ໜີ້ຕ້ອງຮັບອາກອນກຳໄລໃນອານາຄົດທີ່ເປັນສ່ວນຕ່າງຊົ່ວຄາວ. ລາຍຈ່າຍອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນການດຳເນີນງານຂອງປີ ຫຼັງຈາກມີການຕັດແກ້ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກອາກອນ ແລະ ລາຍການອື່ນໆອີງຕາມກົດໝາຍວ່າດ້ວຍອາກອນລາວ ແລະ ອັດຕາຄິດໄລ່ອາກອນ. ອີງຕາມກົດໝາຍວ່າດ້ວຍອາກອນລາວ ແລະ ກົດໝາຍວ່າດ້ວຍການບັນຊີ, ລາຍຈ່າຍອາກອນພາຍໃນປີແມ່ນໄດ້ກຳນົດບົນພື້ນຖານຂອງກຳໄລຂອງແຕ່ລະບໍລິສັດທີ່ໄດ້ມີການຄິດໄລ່. ສຳລັບຈຸດປະສົງການນຳສະເໜີເອກະສານລາຍງານການເງິນແບບລວມກິດຈະການ, ໜີ້ຕ້ອງສົ່ງອາກອນກຳໄລ ແລະ ລາຍຈ່າຍງ່ວງໜ້າຂອງບໍລິສັດ ສ່ວນຕ່າງແມ່ນມີການຫັກລ້າງ ແລະ ນຳສະເໜີບົນພື້ນຖານມູນຄ່າສຸດທິ.

ພັນທະອາກອນອື່ນໆປະກອບມີອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນພັນທະອາກອນທີ່ກຳນົດຕາມລາຍຮັບສຳລັບໄລຍະເວລາທີ່ໄດ້ນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ອາກອນລາຍໄດ້ຂອງພະນັກງານແມ່ນພັນທະອາກອນໂດຍອີງຕາມເງິນເດືອນທີ່ຈ່າຍໃຫ້ພະນັກງານໃນໄລຍະເວລາທີ່ກຳນົດໂດຍການນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

3.19 ສ່ວນຂອງຜູ້ຖືຮຸ້ນ

ທຶນຈົດທະບຽນ

ທຶນຈົດທະບຽນ, ໂດຍປົກກະຕິແລ້ວຊຳລະເປັນເງິນສົດ ຫຼື ຊັບສິນຄົງທີ່, ໂດຍລັດວິສາຫະກິດໄຟຟ້າລາວ, ທີ່ຖືກຮັບຮູ້ ແລະ ນຳສະເໜີຕາມມູນຄ່າຕົ້ນທຶນ ຫຼື ມູນຄ່າທີ່ໄດ້ລະບຸໃນໃບທະບຽນວິສາຫະກິດ.

ຄັງສະສົມຕາມລະບຽບການ

ອີງຕາມມາດຕາທີ 156 ຂອງກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວ ລົງວັນທີ 26 ທັນວາ 2013, ຮຽກຮ້ອງໃຫ້ມີການຈັດສັນກຳໄລສຸດທິມາເປັນຄັງສະສົມຕາມລະບຽບການຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີຂອງບໍລິສັດ. ເມື່ອຄັງສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນແລ້ວ ບໍລິສັດອາດຈະຢຸດການສະສົມຄັງດັ່ງກ່າວ ເວັ້ນເສຍແຕ່ວ່າຈະກົດໝາຍຈະລະບຸເປັນຢ່າງອື່ນ.

ການປະກອບຜົນກຳໄລເຂົ້າໃນທຶນຂະຫຍາຍທຸລະກິດແມ່ນຂຶ້ນກັບການຕັດສິນໃຈຂອງຜູ້ຖືຮຸ້ນຂອງບໍລິສັດ.

3.20 ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລຕໍ່ຮຸ້ນຂັ້ນພື້ນຖານແມ່ນຄິດໄລ່ໂດຍການຫານກຳໄລສຸດທິຕໍ່ກັບຜູ້ຖືຮຸ້ນສາມັນຂອງກຸ່ມບໍລິສັດ ໂດຍການສະເລ່ຍຍອດເຫຼືອຈຳນວນຮຸ້ນສາມັນພາຍໃນປີ.

ກຳໄລຕໍ່ຮຸ້ນປັບລົດຈະບໍ່ຖືກຄິດໄລ່ ແລະ ບໍ່ຖືກນຳສະເໜີ

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

3.21 ຂໍ້ມູນຈຳແນກຕາມສ່ວນງານ

ສ່ວນງານ ແມ່ນອົງປະກອບທີ່ກຳນົດໂດຍບໍລິສັດເຊິ່ງມີສ່ວນຮ່ວມໃນການຈັດຫາຜະລິດຕະພັນ ຫຼື ການບໍລິການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການຈັດຫາຜະລິດຕະພັນ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດ (ສ່ວນທາງພູມີສາດ) ທີ່ອາດຈະກໍ່ໃຫ້ເກີດມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງຈາກສ່ວນງານອື່ນໆ.

ທຸລະກິດຫຼັກຂອງກຸ່ມບໍລິສັດຕາມໃບທະບຽນວິສາຫະກິດ ແມ່ນການຜະລິດໄຟຟ້າ ໂດຍອີງຕາມຊັບສິນການຜະລິດທີ່ໂອນຍ້າຍເພື່ອຜະລິດກະແສໄຟຟ້າໂດຍອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນສັນຍາຊື້-ຂາຍພະລັງງານ ("PPA") ເປັນຫຼັກ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງກຸ່ມບໍລິສັດຈະບໍ່ໄດ້ຮັບຜົນກະທົບຈາກການໃຫ້ບໍລິການຂອງກຸ່ມບໍລິສັດ ຫຼື ສະຖານທີ່ທີ່ກຸ່ມບໍລິສັດດຳເນີນທຸລະກິດຢູ່. ສິ່ງຜົນໃຫ້ຄະນະຜູ້ບໍລິຫານຂອງກຸ່ມບໍລິສັດມີຄວາມເຫັນວ່າມີພຽງສ່ວນງານດຽວ ສຳລັບທຸລະກິດ ແລະ ທາງພູມີສາດ ແລະ ດັ່ງນັ້ນ, ຈຶ່ງບໍ່ມີຄວາມຈຳເປັນໃນການນຳສະເໜີຂໍ້ມູນຕາມສ່ວນງານ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຮ່ວມ ແລະ ບໍລິສັດຮ່ວມ

4.1 ເງິນລົງທຶນໃນບໍລິສັດໃນເຄືອ

		% ຖືຮຸ້ນໂດຍ ຜ-ຟຟລ		ຈຳນວນເງິນລົງທຶນ (ເອກະສານລາຍງານການເງິນ ແບບແຍກກິດຈະການ)	
	ຂະແໜງທຸລະກິດ	31 ທັນວາ 2024 %	31 ທັນວາ 2023 %	31 ທັນວາ 2024 ລ້ານກີບ	31 ທັນວາ 2023 ລ້ານກີບ
ເງິນລົງທຶນໃນບໍລິສັດໃນເຄືອທີ່ບໍລິສັດເປັນເຈົ້າຂອງໂດຍກົງ					
ບໍລິສັດ ນ້ຳປີ ພາວເວີ ຈຳກັດ (i)	ຜະລິດໄຟຟ້າ	80	80	375,921	538,841
ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີແອວ-ເຈັນ ຈຳກັດຜູ້ດຽວ (ii)	ບໍລິການ ການບຳລຸງຮັກສາ	100	100	2,400	2,400
				378,321	**541,241**

(i) ຊ່ວງປີ 2016, ຜ-ຟຟລ ແລະ ບໍລິສັດກໍ່ສ້າງ ແລະ ບຳລຸງຮັກສາເສັ້ນທາງຈັນຖາວອນ ແລະໄດ້ລົງທຶນໃນ ບໍລິສັດ ນ້ຳປີ ພາວເວີ ຈຳກັດ (ນ້ຳປີ), ບໍລິສັດທີ່ດຳເນີນທຸລະກິດໃນລາວ.

ທຸລະກິດຫຼັກຂອງບໍລິສັດນ້ຳປີແມ່ນການຜະລິດກະແສໄຟຟ້າຈາກໂຄງການກໍ່ສ້າງເຂື່ອນນ້ຳປີ ທີ່ຕັ້ງຢູ່ ເມືອງດາກຈຶງ ແຂວງເຊກອງ. ມີມູນຄ່າໂຄງການການກໍ່ສ້າງປະມານ 276 ລ້ານໂດລາ ສະຫະລັດ. ຫຼັງຈາກການສຳເລັດການກໍ່ສ້າງ, ນ້ຳປີຈະມີຄວາມສາມາດເກັບກະແສໄຟຟ້າໄດ້ເຖິງ 135 ເມັກກາວັດ ເຊິ່ງສາມາດຜະລິດໄດ້ 554 ກິກະວັດຕໍ່ປີໃຫ້ ຟຟລ ໃນການສົ່ງຕໍ່ພາຍໃນ ປະເທດ.

ອີງຕາມແຈ້ງການກ່ຽວກັບການຫຼຸດຜ່ອນການລົງທຶນໃນວັນທີ 30 ຕຸລາ 2024, EDL GEN ໄດ້ຫຼຸດເງິນລົງທຶນເປັນ 19,665,733 ໂດລາ ເທົ່າກັບ 162,920,029,415 ກີບ.

(ii) ວັນທີ 14 ທັນວາ 2017, ຜ-ຟຟລ ໄດ້ສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີແອວ-ເຈັນ ຈຳກັດຜູ້ດຽວ, ເປັນບໍລິສັດທີ່ດຳເນີນທຸລະກິດໃນລາວດ້ວຍທຶນຈົດທະບຽນ 2,400 ລ້ານກີບ. ທຸລະກິດຫຼັກຂອງບໍລິສັດແມ່ນການໃຫ້ບໍລິການການບຳລຸງຮັກສາ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.2 *ເງິນລົງທຶນໃນວິສະຫະກິດຮ່ວມ*

ຫົວໜ່ວຍ: ລ້ານກີບ

	ນ້ຳງື່ມ 2	ນ້ຳເລີກ 1-2	ນ້ຳງື່ມ 5	ຄົມສະຫີງ	ນ້ຳແບ່ງ	ນ້ຳລອງ	ໄຊຍະບູລີ	ນ້ຳມັງ 1	ນ້ຳທາ 1	ຜະລິດໄຟຟ້າ ລາວ ໂຊລາ	ລວມ
ນະວັນທີ 1 ມັງກອນ 2023	**506,568**	**111,793**	**158,240**	**1,193,921**	**39,600**	**15,797**	**3,870,320**	**56,317**	**60,790**	**79,937**	**6,093,283**
ກຳໄລ/(ຂາດທຶນ) ຕາມວິທີ ການຄິດໄລ່ສັດສ່ວນຮຸ້ນ ຜົນກະທົບຈາກອັດຕາ ແລກປ່ຽນ	135,901	12,735	14,652	318,888	4,599	(4,844)	203,351	6,783	(55,208)	-	636,857
ຫັກ:	-	-	-	(1,545,045)	-	-	-	-	-	(79,937)	(1,624,982)
ເງິນປັນຜົນຮັບພາຍໃນປີ	15,622	1,288	1,482	32,236	-	-	23,375	-	(5,582)	-	68,421
	(59,119)	-	-	-	-	-	(52,847)	-	-	-	(111,966)
ນະວັນທີ 31 ທັນວາ 2023	**598,972**	**125,816**	**174,374**	**-**	**44,199**	**10,953**	**4,044,199**	**63,100**	**-**	**-**	**5,061,613**
ກຳໄລ/(ຂາດທຶນ) ຕາມວິທີ ການຄິດໄລ່ສັດສ່ວນຮຸ້ນ ຜົນກະທົບຈາກອັດຕາ ແລກປ່ຽນ	280,266	20,486	31,189	-	(1,893)	2,115	170,727	14,819	-	-	517,709
ຫັກ:	8,198	(137)	(208)	-	-	-	4,994	-	-	-	12,847
ເງິນປັນຜົນຮັບພາຍໃນປີ	(104,125)	-	-	-	-	-	(99,029)	-	-	-	(203,154)
ນະວັນທີ 31 ທັນວາ 2024	**783,311**	**146,165**	**205,355**	**-**	**42,306**	**13,068**	**4,120,891**	**77,919**	**-**	**-**	**5,389,015**

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.2 *ເງິນລົງທຶນໃນວິສະຫະກິດຂາຮຸ້ນ (ຕໍ່)*

ເງິນລົງທຶນໃນວິສະຫະກິດຂາຮຸ້ນມີດັ່ງລຸ່ມນີ້:

		31 ທັນວາ 2024 ລ້ານກີບ	*31 ທັນວາ 2023* ລ້ານກີບ
ບໍລິສັດ ໄຟຟ້ານ້ຳງື່ມ 2 ຈຳກັດ	(ກ)	454,742	454,742
ບໍລິສັດ ໄຟຟ້ານ້ຳລີກ 1-2 ຈຳກັດ	(ຂ)	32,240	32,240
ບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ	(ຄ)	80,022	80,022
ບໍລິສັດ ໄຟຟ້ານ້ຳແປ່ງ ຈຳກັດ	(ງ)	18,162	18,162
ບໍລິສັດ ໄຟຟ້ານ້ຳລອງ ຈຳກັດ	(ຈ)	5,537	5,537
ບໍລິສັດ ໄຟຟ້າໄຊຍະບູລີ ຈຳກັດ	(ສ)	3,172,963	3,172,963
ບໍລິສັດ ໄຟຟ້ານ້ຳມັງ 1 ຈຳກັດ	(ຊ)	37,596	37,596
ບໍລິສັດ ໄຟຟ້ານ້ຳທາ 1 ຈຳກັດ	(ຍ)	244,474	244,474

(ກ) ບໍລິສັດ ໄຟຟ້ານ້ຳງື່ມ 2 ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນການພັດທະນາ ການ, ກໍ່ສ້າງ ແລະ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳງື່ມ 2 (615 ມວ) ຕັ້ງຢູ່ເຂື່ອນນ້ຳງື່ມແຂວງ ວຽງຈັນ, ສປປ ລາວ. ທຸລະກິດເຫຼົ່ານີ້ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານໃນປີ 2007 ລະຫວ່າງລັດຖະບານ ແລະ ບໍລິສັດນ້ຳງື່ມ 2 ຈຳກັດ. ບໍລິສັດນ້ຳງື່ມ 2 ຈຳກັດ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2010 ເປັນຕົ້ນມາ.

(ຂ) ບໍລິສັດ ໄຟຟ້ານ້ຳລີກ 1-2 ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນການພັດທະນາ, ກໍ່ສ້າງ ແລະ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳລີກ 1-2 (100ມວ) ຕັ້ງຢູ່ເຂື່ອນນ້ຳລີກແຂວງ ວຽງຈັນ, ສປປ ລາວ. ທຸລະກິດເຫຼົ່ານີ້ ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານລົງວັນທີ 30 ຕຸລາ 2006 ລະຫວ່າງລັດຖະບານລາວ ("ລບລ"), ຕາງໜ້າໂດຍຄະນະກຳມະການວາງແຜນ ແລະ ການລົງທຶນ ແລະ ບໍລິສັດໄຟຟ້ານ້ຳລີກ 1-2 ຈຳກັດ. ບໍລິສັດໄຟຟ້ານ້ຳລີກ 1-2 ຈຳກັດ ໄດ້ເລີ່ມດຳເນີນການຜະລິດ ຕັ້ງແຕ່ປີ 2010 ເປັນຕົ້ນມາ.

(ຄ) ບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນການພັດທະນາ, ກໍ່ສ້າງ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳງື່ມ 5 (120 ມວ) ຕັ້ງຢູ່ເຂື່ອນນ້ຳຕົ່ງແຂວງ ວຽງຈັນ ແລະ ໂຮງໄຟຟ້າຢູ່ແຂວງຊຽງຂວາງ, ສປປ ລາວ. ທຸລະກິດເຫຼົ່ານີ້ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານໃນເດືອນ ມັງກອນ 2007 ລະຫວ່າງລັດຖະບານລາວ ("ລບລ") ແລະ ບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ. ສະຖານີໄຟຟ້າຂອງບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ ໄດ້ສຳເລັດໃນປີ 2012 ແລະ ໄດ້ ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2013 ເປັນຕົ້ນມາ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.2 ເງິນລົງທຶນໃນວິສະຫະກິດຂາຮຸ້ນ (ຕໍ່)

(ງ) ບໍລິສັດ ໄຟຟ້ານ້ຳແບ່ງ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການເຂື່ອນໄຟຟ້ານ້ຳແບ່ງ, ຕັ້ງຢູ່ແຂວງ ອຸດົມໄຊ ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2016.

(ຈ) ບໍລິສັດ ໄຟຟ້ານ້ຳລອງ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການເຂື່ອນໄຟຟ້ານ້ຳລອງ, ຕັ້ງຢູ່ແຂວງ ຫຼວງນ້ຳທາ ພາຍໃຕ້ສັນຍາສຳປະທານໃນປີ 2011 ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2013.

(ສ) ບໍລິສັດ ໄຟຟ້າໄຊຍະບູລີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການຜະລິດໄຟຟ້າ ໄຊຍະບູລີ, ຕັ້ງຢູ່ແຂວງ ໄຊຍະບູລີ ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2013 ເປັນຕົ້ນມາ.

(ຊ) ບໍລິສັດ ໄຟຟ້ານ້ຳມັງ 1 ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການເຂື່ອນໄຟຟ້ານ້ຳມັງ 1, ຕັ້ງຢູ່ແຂວງ ບໍລິຄຳໄຊ ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2012 ເປັນຕົ້ນມາ.

(ຍ) ບໍລິສັດ ໄຟຟ້ານ້ຳທາ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້ານ້ຳທາ (168ມວ) ຢູ່ນ້ຳທາ ແຂວງ ບໍ່ແກ້ວ ແລະ ແຂວງ ຫຼວງນ້ຳທາ, ແລະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2019 ເປັນຕົ້ນມາ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.3 ເງິນລົງທຶນໃນບໍລິສັດຮຸ້ນສ່ວນ

ໜ່ວຍ: ລ້ານກີບ

	ເຫີນ-ຫີນບຸນ	ຫ້ວຍເຫາະ	ຫ້ວຍລຳພັນ ຕອນລຸ່ມ	ນ້ຳດີກ 1	ນ້ຳພູນ	ອີແອນອີ	EDL-Gen RED	ນ້ຳເທີນ 1	ນ້ຳລີກ 1	ລວມ
ນະວັນທີ 1 ມັງກອນ 2023	**2,868,962**	**40,657**	**18,347**	**52,152**	**2,601**	**5,638**	**122,068**	**518,375**	**60,292**	**3,689,092**
ການເພີ່ມທຶນ	-	-	4,102	-	5,301	4,800	-	-	-	14,203
ກຳໄລ/(ຂາດທຶນ) ຕາມວິທີການຄິດໄລ່ ສັດສ່ວນຮຸ້ນ	669,891	36,810	(4,249)	(169)	(3,733)	16,721	-	(63,580)	(8,908)	642,783
ຜົນກະທົບຈາກອັດຕາແລກປ່ຽນ	67,721	3,722	-	-	-	-	-	(6,428)	(900)	64,115
ຫັກ: ເງິນປັນຜົນຮັບພາຍໃນປີ	(305,438)	(37,108)	-	-	-	-	-	-	-	(342,546)
ນະວັນທີ 31 ທັນວາ 2023	**3,301,136**	**44,081**	**18,200**	**51,983**	**4,168**	**27,159**	**122,068**	**448,367**	**50,485**	**4,067,647**
ການເພີ່ມທຶນ	-	-	-	-	3,484	-	-	-	-	3,484
ກຳໄລ/(ຂາດທຶນ) ຕາມວິທີການຄິດໄລ່ ສັດສ່ວນຮຸ້ນ	1,085,198	50,395	(3,028)	(186)	(3,784)	16,861	-	(21,052)	(11,127)	1,113,277
ຜົນກະທົບຈາກອັດຕາແລກປ່ຽນ	(7,231)	(336)	-	-	-	-	-	140	74	(7,353)
ຫັກ: ເງິນປັນຜົນຮັບພາຍໃນປີ	(936,032)	(41,630)	-	-	-	-	-	-	-	(977,662)
ນະວັນທີ 31 ທັນວາ 2024	**3,443,071**	**52,510**	**15,172**	**51,797**	**3,868**	**44,020**	**122,068**	**427,455**	**39,432**	**4,199,393**

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.3 *ເງິນລົງທຶນໃນບໍລິສັດຮຸ້ນສ່ວນ* (ຕໍ່)

		31 ທັນວາ 2024	*31 ທັນວາ 2023*
		ລ້ານກີບ	*ລ້ານກີບ*
ບໍລິສັດ ເຫີນ-ຫີນບຸນ ພາວເວີ	(ກ)	1,120,696	1,120,696
ບໍລິສັດ ໄຟຟ້າ ຫ້ວຍເຫາະ	(ຂ)	1,171	1,171
ບໍລິສັດ ຫ້ວຍລຳພັນຕອນລຸ່ມ	(ຄ)	38,218	38,218
ບໍລິສັດ ໄຟຟ້ານ້ຳດີກ 1	(ງ)	54,942	54,942
ບໍລິສັດ ນ້ຳພູນ ພາວເວີ	(ຈ)	20,716	17,232
ອີແອນອີ	(ສ)	4,800	4,800
ບໍລິສັດ EDL-Gen RED	(ຊ)	123,222	123,222
ບໍລິສັດ ໄຟຟ້າ ນ້ຳເຫີນ 1	(ຍ)	497,163	497,163
ບໍລິສັດ ນ້ຳລີກ 1	(ດ)	34,680	34,680

(ກ) ບໍລິສັດ ໄຟຟ້າ ເຫີນ-ຫີນບຸນ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກ ແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້າ ເຫີນ-ຫີນບຸນ, ຕັ້ງຢູ່ເມືອງ ບໍລິຄຳໄຊ, ແຂວງ ຄຳມ່ວນ. ບໍລິສັດ ເຫີນ-ຫີນບຸນ ຈຳກັດ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 1998 ເປັນຕົ້ນມາ.

(ຂ) ບໍລິສັດ ໄຟຟ້າ ຫ້ວຍເຫາະ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກ ແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້າ ຫ້ວຍເຫາະ, ຕັ້ງຢູ່ແຂວງ ອັດຕະປື. ບໍລິສັດ ໄຟຟ້າ ຫ້ວຍເຫາະ ໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 1999 ເປັນຕົ້ນມາ.

(ຄ) ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກ ແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້າ ຫ້ວຍລຳພັນຕອນລຸ່ມ, ຕັ້ງຢູ່ ເມືອງ ລາມາມ, ແຂວງ ເຊກອງ. ບໍລິສັດ ໄດ້ສຳເລັດການກໍ່ສ້າງໃນປີ 2024; ຢ່າງໃດກໍ່ຕາມ, ມັນຍັງຢູ່ໃນຂັ້ນຕອນການຂໍຮັບສັນຍາສຳປະທານໃນວັນທີຂອງລາຍງານການເງິນນີ້. ໂດຍເລີ່ມຕົ້ນການດຳເນີນງານນັບຕັ້ງແຕ່ປີ 2021.

(ງ) ບໍລິສັດ ໄຟຟ້ານ້ຳດີກ 1 ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້ານ້ຳດີກ, ຕັ້ງຢູ່ແຂວງ ຫົວພັນ. ເຊິ່ງໂຄງການແມ່ນຍັງຢູ່ໃນໄລຍະການກໍ່ສ້າງ ນະມື້ທີ່ອອກເອກະສານລາຍງານການເງິນ.

(ຈ) ບໍລິສັດ ນ້ຳພູນ ພາວເວີ ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳເນີນກິດຈະການໂຄງການເຂື່ອນໄຟຟ້ານ້ຳພູນ, ຕັ້ງຢູ່ແຂວງ ໄຊຍະບຸລີ.

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.3 ເງິນລົງທຶນໃນບໍລິສັດຮຸ້ນສ່ວນ (ຕໍ່)

(ສ) ບໍລິສັດ ອີແອນອີ ເອັນຈີເນ່ຍລິ້ງ ແອນ ເຊີວິສ ຈຳກັດ ກໍ່ຕັ້ງຂຶ້ນໂດຍ 2 ຄູ່ຮຸ້ນສ່ວນທຸລະກິດຄື: ບໍລິສັດ ບໍລິການຄຸ້ມຄອງ ຜະລິດ ແລະ ບຳລຸງຮັກສາ ອີດີແອວ-ເຈັນ ຈຳກັດຜູ້ດຽວ, ບໍລິສັດໃນເຄືອຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດ ເອັກໂກ ເອັນຈີເນ່ຍລິ້ງ ແອນ ເຊີວິສ, ເຊິ່ງເປັນບໍລິສັດ ຊັ້ນນຳດ້ານການໃຫ້ບໍລິການ ແລະ ບຳລຸງຮັກສາ ໂຮງງານ ໄຟຟ້າ ຂອງໄທ. ບໍລິສັດ ໄດ້ສ້າງຕັ້ງໃນວັນທີ 15 ພະຈິກ 2018.

(ຊ) ໃນວັນທີ 22 ມີນາ 2019, ບໍລິສັດ ຜະລິດ-ໄຟຟ້າລາວ ໄດ້ເຊັນສັນຍາຮ່ວມທຶນກັບບໍລິສັດຄູ່ຮ່ວມສັນຍາ ປະກອບມີ ບໍລິສັດ AVIC- INTL Project Engineering Company ແລະ ບໍລິສັດ Guizhou Transportation Planning Survey and Design Academe ແລະ ໄດ້ສ້າງຕັ້ງບໍລິສັດ ອີດີແອນ ເຈັນ ເຣດ ຈຳກັດ ຂຶ້ນພາຍຫຼັງໃນວັນທີ 21 ພຶດສະພາ 2019. ບໍລິສັດໄດ້ຖືກຍຸບລົງຕາມຍົດບັນທຶກກອງປະຊຸມຜູ້ຖືຫຸ້ນ, ໃນວັນທີ 18 ທັນວາ 2020, ບໍລິສັດໄດ້ ມີມະຕິຕົກລົງເປັນເອກະສັນຍົກເລີກສັນຍາຜູ້ຖືຫຸ້ນ ແລະ ປິດບໍລິສັດ EDL-GEN RED CO.,LTD.

(ຍ) ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນ ການພັດທະນາ, ກໍ່ສ້າງ ແລະ ຜະລິດຂອງເຂື່ອນໄຟຟ້າພະລັງນ້ຳ ນ້ຳເທີນ 1 (600 ມວ) ຢູ່ເຂື່ອນນ້ຳເທີນ ແຂວງ ບໍລິຄຳ ໄຊ, ສປປ ລາວ. ທຸລະກິດເຫຼົ່ານີ້ແມ່ນການດຳເນີນ ພາຍໃຕ້ສັນຍາສຳປະທານໃນວັນທີ 14 ມິຖຸນາ 2016 ລະຫວ່າງ ລັດຖະບານລາວ ("ລບລ") ແລະ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ. ໄດ້ເລີ່ມຕົ້ນການດຳເນີນງານນັບຕັ້ງແຕ່ປີ 2022.

(ດ) ບໍລິສັດ ໄຟຟ້ານ້ຳລີກ 1 ຈຳກັດ ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ. ທຸລະກິດຫຼັກແມ່ນດຳ ເນີນກິດຈະການໂຄງການເຂື່ອນໄຟຟ້ານ້ຳລີກ 1, ພາຍໃຕ້ສັນຍາສຳປະທານໃນວັນທີ 6 ກຸມພາ 2013.

4. ເງິນລົງທຶນໃນບໍລິສັດໃນເຄືອ, ວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.4 *ເງິນລົງທຶນອື່ນໆ*

		ມູນຄ່າເງິນລົງທຶນ	
		31 ທັນວາ 2024	*31 ທັນວາ 2023*
	ຂະແໜງທຸລະກິດ	*ລ້ານກີບ*	*ລ້ານກີບ*
ບໍລິສັດ ຜະລິດໄຟຟ້າພະລັງງານນ້ຳ ນ້ຳອຸ ຈຳກັດ	ຜະລິດໄຟຟ້າ	375,688	375,688
		375,688	**375,688**

ເງິນລົງທຶນນີ້ແມ່ນການລົງທຶນໃນບໍລິສັດ ຜະລິດໄຟຟ້າພະລັງງານນ້ຳ ນ້ຳອຸ ຈຳກັດພາຍໃຕ້ຊື່ຂອງ ຟຟລ, ກຸ່ມບໍລິສັດ ໄດ້ນຳສະເໜີການລົງທຶນນີ້ເປັນເງິນລົງທຶນອື່ນໆເນື່ອງຈາກວ່າຍັງບໍ່ໄດ້ສຳເລັດການໂອນຮຸ້ນໂຄງການຈາກຊື່ ຟຟລ ມາເປັນ ຜ-ຟຟລ, ໃນວັນທີ 18 ສິງຫາ 2011, ບໍລິສັດໄດ້ເຊັນສັນຍາຜູ້ຖືຮຸ້ນກັບບໍລິສັດ Sinohydro Corporation ຈຳກັດ ເພື່ອ ສ້າງຕັ້ງບໍລິສັດ ຜະລິດໄຟຟ້າພະລັງງານນ້ຳ ນ້ຳອຸ ຈຳກັດ ("ນ້ຳອຸ"), ເປັນບໍລິສັດຮ່ວມທຶນຈຳກັດພາຍໃຕ້ກົດໝາຍຂອງ ສປປ ລາວ, ໂດຍເບື້ອງຕົ້ນມີທຶນຈົດທະບຽນ 300 ໂດລາສະຫະລັດຕໍ່ຮຸ້ນ. ຜ-ຟຟລຖືຄອງຮຸ້ນສາມັນຈຳນວນ 1,500 ຮຸ້ນ ທີ່ຖອກແລ້ວ ທຽບເທົ່າກັບ 15% ຂອງຮຸ້ນສາມັນທັງໝົດ. ກິດຈະກຳຫຼັກຂອງນ້ຳອຸແມ່ນໂຄງການເຂື່ອນໄຟຟ້ານ້ຳ ອຸ. ນະມື້ປິດລາຍງານ, ບໍລິສັດຍັງສືບຕໍ່ການດຳເນີນການຍື່ນລາຍຊື່ຜູ້ຕາງໜ້າຂອງສະພາບໍລິຫານໃນບໍລິສັດຕ່າງກ່າວ.

ທຶນສຳຮອງໄດ້ມີການຈັດຕັ້ງຕາມສັນຍາຂອງຜູ້ຖືຮຸ້ນເພື່ອໃຫ້ເປັນໄປຕາມຂໍ້ກຳນົດການລົງທຶນໃນຮຸ້ນຈຳນວນ 265,000,000 ໂດລາສະຫະລັດສຳລັບໂຄງການ (ເຊິ່ງມີທຶນຈົດທະບຽນ 3,000,000 ໂດລາສະຫະລັດ) ຕາມທີ່ກຳນົດ ໄວ້ໃນຂໍ້ຕົກລົງທາງການເງິນ.

5. ເງິນລ່ວງໜ້າຊັບສິນພາຍໃຕ້ສັນຍາສຳປະທານ

ຂໍ້ມູນນີ້ກ່ຽວພັນກັບເງິນລ່ວງໜ້າໃຫ້ ຟຟລ, ສຳລັບຕົ້ນທຶນທີ່ເກີດຂຶ້ນຈາກຊັບສິນໂຄງການພາຍໃຕ້ປົດບັນທຶກຄວາມເຂົ້າໃຈ. ລາຍລະອຽດເງິນລ່ວງໜ້າມີດັ່ງຕໍ່ໄປນີ້:

	ແບບສັງລວມ		ແບບແຍກຕ່າງຈະການ	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ເງິນລ່ວງໜ້າສຳລັບການດຳເນີນງານ:				
ອີດີແອວເຈັ້ນ ໂອແອນເອັ້ມ	-	-	7,025	7.025
ເງິນລ່ວງໜ້າໃຫ້ ຟຟລ ຊັບສິນພາຍໃຕ້ສັນຍາສຳປະທານ				
ນ້ຳຄານ 3 (ກ)	348,522	348,522	348,522	348,522
ນ້ຳຈຽນ (ກ)	678,504	678,504	678,504	678,504
ເຊເສັດ 3 (ກ)	149,418	149,418	149,418	149,418
ນ້ຳຫົ້ມບຸນ (ຂ)	205,955	205,955	205,955	205,955
ນ້ຳງື່ມ 1 ຈັ້ກເບີ 6 (ຄ)	247,374	247,374	247,374	247,374
ນ້ຳງຽບ 2 (ຄ)	111,470	111,470	111,470	111,470
ເຊລະໝານ 3 (ຄ)	232,164	232,164	232,164	232,164
	1,973,407	**1,973,407**	**1,980,432**	**1,980,432**

ເງິນລ່ວງໜ້າໃຫ້ ຟຟລ ຊັບສິນພາຍໃຕ້ສັນຍາສຳປະທານ

ພາຍໃຕ້ປົດບັນທຶກຄວາມເຂົ້າໃຈ, ກຸ່ມບໍລິສັດເຫັນດີໃນການຊຳລະເງິນຄືນທັງໝົດໃຫ້ ຟຟລ ສຳລັບທຸກລາຍຈ່າຍທີ່ ຟຟລ ຈ່າຍຜ່ານມາ ຈົນຮອດມື້ສຳເລັດໂຄງການບົ່ມພື້ນຖານທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຫຼື ຈົນກວ່າຈະສຳເລັດການໂອນກຳມະສິດຂອງໂຄງການທີ່ກ່ຽວຂ້ອງ. ພ້ອມກັນນີ້, ກຸ່ມບໍລິສັດມີໜ້າທີ່ຮັບຜິດຊອບໃນຊຳລະເງິນຄືນໃຫ້ ຟຟລ ຫຼື ຈ່າຍເງິນລ່ວງໜ້າໃຫ້ ຟຟລ ຕາມທີ່ຕົກລົງເຫັນດີຂອງທັງສອງຝ່າຍຢ່າງຕໍ່ເນື່ອງ. ນອກຈາກນັ້ນ, ຟຟລ ອາດມີພາລະຜູກພັນທາງການເງິນກ່ຽວກັບໂຄງການດັ່ງກ່າວ ຕາມທີ່ໄດ້ລະບຸໄວ້ໃນສັນຍາ. ທັງສອງຝ່າຍແມ່ນຕົກລົງເຫັນດີໃນລາຄາຂາຍເມື່ອມີການໂອນກຳມະສິດຂອງໂຄງການ, ກຸ່ມບໍລິສັດຈະຕ້ອງຈ່າຍຈຳນວນເງິນທີ່ເຫຼືອຫຼັງຈາກຫັກລົບກັບເງິນຈ່າຍລ່ວງໜ້າທີ່ກ່ຽວຂ້ອງໃຫ້ກັບ ຟຟລ.

(ກ) ໂຄງການທັງສາມນີ້ເຊິ່ງລວມມີ ນ້ຳຄານ 3, ນ້ຳຈຽນ ແລະ ເຊເສັດ 3 ແມ່ນຖືກໂອນກຳມະສິດຈາກ ຟຟລ ໃຫ້ກຸ່ມບໍລິສັດ ແລະ ກຸ່ມບໍລິສັດ ແມ່ນໄດ້ເລີ່ມດຳເນີນການຕັ້ງແຕ່ປີ 2020. ໂຄງການຈະຖືກໂອນໃຫ້ກຸ່ມບໍລິສັດຫຼັງຈາກໄດ້ຮັບການເຫັນດີໃນການຕົກລົງເລື່ອງພາລະຜູກພັນ ແລະ ເງື່ອນໄຂທີ່ຢູ່ໃນສັນຍາຊື້ຂາຍໄຟ (PPA). ນະວັນທີທີ່ອອກປົດລາຍງານ, ເງື່ອນໄຂທັງໝົດຍັງບໍ່ທັນສຳເລັດ.

ວັນທີ 29 ທັນວາ 2023, ຜ ຟຟລ ແລະ ຟຟລ ຕົກລົງທີ່ຈະປ່ຽນເງິນລ່ວງໜ້າ ໃຫ້ກັບ ຟຟລ ສຳລັບ ບໍລິສັດນ້ຳຈຽນ ເປັນບໍລິສັດຮຸ້ສ່ວນໃນນາມ ບໍລິສັດ ຜະລິດໄຟຟ້າ ນ້ຳຈຽນ ຈຳກັດ ໂດຍມີຂໍ້ຕົກລົງເບື້ອງຕົ້ນວ່າ ຜ - ຟຟລ ຖືຮຸ້ນ 26% ແລະ ຟຟລ ຖືຮຸ້ນ 74%. ຢ່າງໃດກໍຕາມ, ການຈັດຮຸ້ນແມ່ນຍັງບໍ່ທັນສຳລັດໂດຍທັງສອງຝ່າຍ ແລະ ຈະຕ້ອງໄດ້ຮັບການກວດສອບອີກຄັ້ງກ່ຽວກັບຈຳນວນຮຸ້ນ ແລະ ເປີເຊັນການເປັນເຈົ້າຂອງ.

(ຂ) ໂຄງການນີ້ຍັງຢູ່ໃນຂັ້ນຕອນກຳລັງກໍ່ສ້າງ ນະວັນທີ 31 ທັນວາ 2024

(ຄ) ສຳລັບໂຄງການທັງ 3 ແຫ່ງໄດ້ແກ່: ໂຄງການນ້ຳງື່ມ 1 ຈັ້ກເບີ 6, ນ້ຳງຽບ 2 ແລະ ເຊກະໝານ 3 ເຊິ່ງປະຈຸບັນແມ່ນດຳເນີນການໂດຍ ຟຟລ ແລະ ຍັງບໍ່ທັນໄດ້ໂອນໃຫ້ກຸ່ມບໍລິສັດ. ໂຄງການດັ່ງກ່າວຈະໂອນໄປຍັງກຸ່ມບໍລິສັດຫຼັງຈາກຂໍ້ຕົກລົງສຸດທ້າຍ ກ່ຽວກັບພັນທະ ແລະ ເງື່ອນໄຂໃນສັນຍາຂາຍໄຟ PPA ສຳເລັດ. ນະວັນທີລາຍງານ, ເງື່ອນໄຂທັງໝົດຍັງບໍ່ທັນສຳເລັດ.

6. ຊັບສິນບັດຄົງທີ່ມີຕົວຕົນ

	ແບບສັງລວມ						
	ອາຄານ ລ້ານກີບ	ເຂື່ອນໄຟຟ້າ ລ້ານກີບ	ເຄື່ອງຈັກ ແລະ ອຸປະກອນ ລ້ານກີບ	ພາຫະນະ ລ້ານກີບ	ອຸປະກອນ, ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ຊັບສິນພວມກໍ່ສ້າງ ລ້ານກີບ	ລວມ ລ້ານກີບ
ຕົ້ນທຶນ:							
ນະວັນທີ 1 ມັງກອນ 2024	798,294	6,885,740	4,736,078	35,914	31,272	500,048	12,987,346
ເພີ່ມຂຶ້ນໃນໄລຍະ	2,174	8,894	19,218	10,162	2,279	223,075	265,803
ສະສາງອອກ	(542)	-	(1,298)	(3,546)	(1,231)	(137,833)	(144,451)
ນະວັນທີ 31 ທັນວາ 2024	799,926	6,894,634	4,753, 998	42,530	32,320	585,290	13,108,698
ຄ່າຫຼຸ້ຍຫ້ຽນສະສົມ:							
ນະວັນທີ 1 ມັງກອນ 2024	447,190	2,172,956	2,214,433	21,742	19,760	-	4,876,081
ຫັກຄ່າຫຼຸ້ຍຫ້ຽນພາຍໃນໄລຍະ	27,202	245,652	256,127	4,702	3,709	-	537,392
ສະສາງອອກ	(542)	-	(1,298)	(3,546)	(1,231)	-	(6,617)
ນະວັນທີ 31 ທັນວາ 2024	473,850	2,418,608	2,469,262	22,898	22,238	-	5,406,856
ມູນຄ່າສຸດທິ							
ນະວັນທີ 1 ມັງກອນ 2024	351,104	4,712,785	2,521,645	14,172	11,512	500,048	8,111,267
ນະວັນທີ 31 ທັນວາ 2024	326,076	4,476,026	2,284,736	19,633	10,082	585,290	7,701,842

6. ຊັບສິນບັດຄົງທີ່ມີຕົວຕົນ (ຕໍ່)

	ແບບແຍກກິດຈະການ						
	ອາຄານ ລ້ານກີບ	ເຂື່ອນໄຟຟ້າ ລ້ານກີບ	ເຄື່ອງຈັກ ແລະ ອຸປະກອນ ລ້ານກີບ	ພາຫະນະ ລ້ານກີບ	ອຸປະກອນ, ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ຊັບສິນພວມກໍ່ສ້າງ ລ້ານກີບ	ລວມ ລ້ານກີບ
ຕົ້ນທຶນ:							
ນະວັນທີ 1 ມັງກອນ 2024	798,293	6,885,741	4,697,664	31,915	29,477	314,736	12,757,826
ເພີ່ມຂຶ້ນໃນໄລຍະ	2,174	8,894	8,243	7,858	2,692	222,854	252,715
ສະສາງອອກ	(542)	-	(1,205)	(2,963)	(1,231)	-	(5,941)
ນະວັນທີ 31 ທັນວາ 2024	799,925	6,894,635	4,704,702	36,810	30,938	537,590	13,004,600
ຄ່າຫຼຸ້ຍຫ້ຽນສະສົມ:							
ນະວັນທີ 1 ມັງກອນ 2024	447,189	2,172,958	2,168,961	18,549	18,473	-	4,826,130
ຫັກຄ່າຫຼຸ້ຍຫ້ຽນພາຍໃນໄລຍະ	27,202	245,651	255,343	4,201	3,686	-	536,083
ສະສາງອອກ	(542)	-	(1,205)	(2,963)	(1,231)	-	(5,941)
ນະວັນທີ 31 ທັນວາ 2024	473,849	2,418,609	2,423,099	19,787	20,928	-	5,356,272
ມູນຄ່າສຸດທິ							
ນະວັນທີ 1 ມັງກອນ 2024	351,104	4,712,783	2,528,703	13,366	11,004	314,736	7,931,699
ນະວັນທີ 31 ທັນວາ 2024	326,076	4,476,026	2,281,603	17,023	10,010	537,590	7,648,328

7. ເງິນລ່ວງໜ້າໃຫ້ຜູ້ຮັບເໝົາໂຄງການກໍ່ສ້າງ

	ແບບສັງລວມ		*ແບບແຍກຕ່າງຫາກ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ໂຄງການເຂື່ອນໄຟຟ້າ ນ້ຳບີ ພາວເວີ (*)	341,075	341,075	-	-
	341,075	**341,075**	**-**	**-**

(*) ເງິນລ່ວງໜ້າ ຈຳນວນ 41,39 ລ້ານໂດລາສະຫະລັດ ທຽບເທົ່າກັບ 341,075 ລ້ານກີບ ໃຫ້ກັບ ບໍລິສັດ ພາວເວີ ຊາຍນາ ເສີງຕຸ ເອັນຈີເນ່ຍລິ້ງ ຄໍອອເປີເລເຊິນ ຈຳກັດ (PCC) ສຳລັບໂຄງການກໍ່ສ້າງໂຄງການເຂື່ອນໄຟຟ້າ ນ້ຳບີ ພາວເວີ. ນະວັນທີ ຂອງບົດລາຍງານ, ໂຄງການແມ່ນຢູ່ໃນຂັ້ນຕອນສືບຕໍ່ການດຳເນີນງານ.

8. ເງິນສົດ

	ແບບສັງລວມ		*ແບບແຍກຕ່າງຫາກ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ເງິນຝາກທະນາຄານ	648,237	1,059,064	638,487	1,058,141
ເງິນສົດ	311	327	307	289
	648,548	**1,059,391**	**638,794**	**1,058,430**

9. ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	ແບບສັງລວມ		*ແບບແຍກຕ່າງຫາກ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ໜີ້ຕ້ອງຮັບທາງການຄ້າ	**319,336**	**1,060,308**	**319,336**	**1,022,939**
ຈາກພາກສ່ວນພາຍນອກ	*-*	*50,987*	*-*	*13,618*
ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 22)	*319,336*	*1,009,321*	*319,336*	*1,009,321*
ໜີ້ຕ້ອງຮັບອື່ນໆ	**870,412**	**689,170**	**917,916**	**712,341**
ຈາກພາກສ່ວນພາຍນອກ	*37,065*	*84,410*	*4,670*	*84,411*
ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 22)	*833,347*	*604,760*	*913,246*	*627,930*
	1,189,748	**1,749,478**	**1,237,252**	**1,735,280**

10. ຊັບສິນໝຸນວຽນອື່ນໆ

	ແບບສັງລວມ		*ແບບແຍກກິດຈະການ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ຂາດທຶນທີ່ບໍ່ເກີດຂຶ້ນຈິງຈາກອັດຕາແລກປ່ຽນ	7,645,274	9,264,838	7,644,729	9,293,525
ຈ່າຍລ່ວງໜ້າອາກອນກຳໄລ	31,875	31,875	31,875	31,875
ຈ່າຍລ່ວງໜ້າຄ່າປະກັນໄພ	8,286	-	8,286	-
ຈ່າຍລ່ວງໜ້າຄ່າປະກັນສັນຍາ	2,307	1,313	2,307	-
ໜີ້ຕ້ອງຮັບອື່ນໆ	8,441	8,983	6,959	8,817
ເງິນລ່ວງໜ້າໃຫ້ຜູ້ສະໜອງ	-	2,307	-	2,307
	7,696,183	**9,309,316**	**7,694,156**	**9,336,524**

11. ເງິນກູ້

	ແບບສັງລວມ		*ແບບແຍກກິດຈະການ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ເງິນກູ້ຢືມໄລຍະສັ້ນ	828,547	1,486,770	828,547	1,486,770
ເງິນກູ້ຢືມໄລຍະຍາວ	48,253	101,572	48,253	101,572
- ເງິນກູ້ໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ (ເບິ່ງອະທິບາຍເລກທີ 22)	*48,253*	*12,721*	*48,253*	*12,721*
- ເງິນກູ້ໄລຍະຍາວຈາກສະຖາບັນທາງການເງິນ	*-*	*88,851*	*-*	*88,851*
ເງິນກູ້ບໍ່ໝຸນວຽນ:	32,168	45,318	32,168	45,318
- ເງິນກູ້ໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ (ເບິ່ງອະທິບາຍເລກທີ 22)	*32,168*	*45,318*	*32,168*	*45,318*
	908,968	**1,633,660**	**908,968**	**1,633,660**

11. ເງິນກູ້ (ຕໍ່)

ການກູ້ຢືມນີ້ແມ່ນເງິນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນ. ລາຍລະອຽດຂອງການກູ້ຢືມ ນະວັນທີ 31 ທັນວາ 2024 ມີດັ່ງນີ້:

ຜູ້ໃຫ້ກູ້ຢືມ	*ມູນຄ່າ ລ້ານກີບ*	*ມູນຄ່າເດີມ*	*ສະກຸນ ເງິນ*	*ອັດຕາດອກເບ້ຍ*	*ມື້ຄົບກຳນົດ*
ກະຊວງການເງິນ	548,325	25,000,000	USD	6.50%	30 ທັນວາ 2025
ທະນາຄານ ພັດທະນາລາວ ຈຳກັດ	159,590	250,000,000	THB	9.00%	26 ມີຖຸນາ 2025
ທະນາຄານ ຫວຽດຕິນ ຈຳກັດ	120,632	5,500,000	USD	6.80%	10 ມີນາ 2025
ເງິນກູ້ຢືມຕໍ່ໂຄງການ, ໂອນຈາກ ໄຟຟ້າລາວ (*)	80,421	3,666,667	USD	2.75%	27 ກໍລະກົດ 2027
	908,968				

(*) ເງິນກູ້ນີ້ແມ່ນເງິນກູ້ຢືມຕໍ່ໂຄງການຂອງ ຟຟລ ທີ່ໂອນໄປໃຫ້ ຜ - ຟຟລ ຕາມຂໍ້ຕົກລົງການໂອນການຊຳລະໜີ້ຄືນ ໃນວັນທີ 15 ທັນວາ 2010 ແລະ 28 ກຸມພາ 2013. ອີງຕາມຂໍ້ຕົກລົງເຫຼົ່ານີ້, ຜ - ຟຟລ ຈະຮັບຜິດຊອບຢ່າງເຕັມສ່ວນຕໍ່ພັນທະການຊຳລະໜີ້ໃຫ້ແກ່ ທະນາຄານສົ່ງອອກ-ນຳເຂົ້າຂອງຈີນ ("ຜູ້ໃຫ້ກູ້") ຜ່ານລັດຖະບານ ສປປ ລາວ.

12. ຮຸ້ນກູ້

	ແບບສັງລວມ		*ແບບແຍກຕ່າງຫາກ*	
	31 ທັນວາ 2024 ລ້ານກີບ	*31 ທັນວາ 2023 ລ້ານກີບ*	*31 ທັນວາ 2024 ລ້ານກີບ*	*31 ທັນວາ 2023 ລ້ານກີບ*
ຮຸ້ນກູ້ໝຸນວຽນ	2,638,597	4,616,831	2,638,597	4,616,831
ຮຸ້ນກູ້ບໍ່ໝຸນວຽນ	11,994,844	13,827,294	11,994,844	13,827,294
	14,633,441	**18,444,125**	**14,633,441**	**18,444,125**

ລາຍລະອຽດການເຄື່ອນໄຫວຂອງຮຸ້ນກູ້ມີດັ່ງລຸ່ມນີ້:

	ແບບສັງລວມ		*ແບບແຍກຕ່າງຫາກ*	
	31 ທັນວາ 2024 ລ້ານກີບ	*31 ທັນວາ 2023 ລ້ານກີບ*	*31 ທັນວາ 2024 ລ້ານກີບ*	*31 ທັນວາ 2023 ລ້ານກີບ*
ຍອດຍົກມາ	18,444,125	16,398,002	18,444,125	16,398,002
ເພີ່ມຂຶ້ນໃນປີ	-	2,176,726	-	2,176,726
ການຊຳລະຄືນ	(4,843,461)	(3,218,542)	(4,843,461)	(3,218,542)
ຄ່າເສື່ອມມູນຄ່າທາງການເງິນ ທີ່ຫັກໄວ້	36,242	76,385	36,242	76,385
ຂາດທຶນຈາກການຕີມູນຄ່າ ສະກຸນເງິນຕ່າງປະເທດ	996,535	3,011,554	996,535	3,011,554
	14,633,441	**18,444,125**	**14,633,441**	**18,444,125**

12. ຮຸ້ນກູ້ (ຕໍ່)

ສະຫຼຸບຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນຂອງຮຸ້ນກູ້ ນະວັນທີ 31 ທັນວາ 2024 ແລະ 31 ທັນວາ 2023 ມີດັ່ງລຸ່ມນີ້:

	ແບບສັງລວມ		*ແບບແຍກຕ່າງຈະການ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ໜ້ອຍກວ່າ 1 ປີ	2,638,597	4,624,187	2,638,597	4,624,187
ຫຼາຍກວ່າ 1 ປີແຕ່ຕ່ຳກວ່າ 5 ປີ	9,839,701	4,406,101	9,839,701	4,406,101
ຫຼາຍກວ່າ 5 ປີ	2,249,836	9,555,102	2,249,836	9,555,102
ຫັກ: ຕົ້ນທຶນທາງການເງິນລໍຖ້າຕັດຈາກບັນຊີ	(94,693)	(141,265)	(94,693)	(141,265)
	14,633,441	**18,444,125**	**14,633,441**	**18,444,125**

ຮຸ້ນກູ້ນີ້ແມ່ນຮຸ້ນກູ້ໄລຍະຍາວທີ່ບໍ່ມີຫຼັກຄ້ຳປະກັນທີ່ອອກໃຫ້ໃນ ຄະນະກຳມະການຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປະເທດໄທ (ກຕລ). ສະຫຼຸບຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນຂອງຮຸ້ນກູ້ ນະວັນທີ 31 ທັນວາ 2024 ມີດັ່ງລຸ່ມນີ້:

	ຈຳນວນ ລ້ານກີບ	*ຈຳນວນ (ຫົວໜ່ວຍ ລ້ານ)*	*ສະກຸນເງິນ*	*ອັດຕາດອກເບ້ຍ (%ຕໍ່ປີ)*	*ປີ*	*ອັດຕາດອກເບ້ຍທີ່ຕ້ອງຊຳລະ*	*ວັນທີຄົບກຳນົດ*
2016-ຄັ້ງທີ 2	3,640,878	166.00	USD	5.59%	10	2 ຄັ້ງຕໍ່ປີ	2-ກັນຍາ-26
2016-ຄັ້ງທີ 3	2,083,635	95.00	USD	5.98%	12	2 ຄັ້ງຕໍ່ປີ	2-ກັນຍາ-28
2018-ຄັ້ງທີ 3	921,217	1,443.10	THB	4.85%	7	2 ຄັ້ງຕໍ່ປີ	13-ກໍລະກົດ-25
2018-ຄັ້ງທີ 4	1,211,543	1,897.90	THB	5.50%	10	2 ຄັ້ງຕໍ່ປີ	13-ກໍລະກົດ-28
2018-ຄັ້ງທີ 5	516,944	809.80	THB	6.00%	12	2 ຄັ້ງຕໍ່ປີ	13-ກໍລະກົດ-30
2018-ຄັ້ງທີ 6	1,034,909	1,621.20	THB	6.25%	15	2 ຄັ້ງຕໍ່ປີ	13-ກໍລະກົດ-33
2019-ຄັ້ງທີ 3	697,983	1,093.40	THB	6.50%	12	2 ຄັ້ງຕໍ່ປີ	30-ມັງກອນ-31
2021-ຄັ້ງທີ 3	1,717,380	2,690.30	THB	6.50%	4	ໄຕມາດ	23-ກັນຍາ-25
2022-ຄັ້ງທີ 1	620,741	972.40	THB	6.50%	4,6	ໄຕມາດ	8-ມັງກອນ-27
2023-ຄັ້ງທີ 1	1,589,197	2,489.50	THB	6.50%	3 ປີ ແລະ 10 ເດືອນ	ໄຕມາດ	31-ມັງກອນ-27
2023-ຄັ້ງທີ 2	412,572	646.30	THB	6.50%	3 ປີ ແລະ 8 ເດືອນ	ໄຕມາດ	26-ມັງກອນ-27
2023-ຄັ້ງທີ 2	87,711	137.40	THB	6.30%	3 ປີ	ໄຕມາດ	24-ສິງຫາ-26
2023-ຄັ້ງທີ 2	193,423	303.00	THB	6.90%	3 ປີ ແລະ 8 ເດືອນ	ໄຕມາດ	25-ພະຈິກ-27
	14,728,133						

13. ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ

	ແບບສັງລວມ		*ແບບແຍກກິດຈະການ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ຮັບລ່ວງໜ້າຈາກກະຊວງການເງິນ (*)	4,055,748	-	4,055,748	-
ໜີ້ຕ້ອງສິ່ງໃຫ້ພາກສ່ວນທີ່ສາມ	556,340	651,102	538,694	631,129
ໜີ້ຕ້ອງສິ່ງທາງການຄ້າ ແລະ ອື່ນໆໃຫ້ພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍເລກທີ 22)*	112,004	167,028	112,004	229,301
ໜີ້ຕ້ອງສິ່ງອື່ນໆ	1,281	495	743	63
	4,725,373	**818,625**	**4,707,189**	**860,493**

(*) ນີ້ແມ່ນການຮັບລ່ວງໜ້າຈາກກະຊວງການເງິນ ຈຳນວນ 185 ລ້ານໂດລາສະຫະລັດ ສຳລັບທຶນໝຸນວຽນທາງການເງິນ, ອີງຕາມບົດບັນທຶກຄວາມເຂົ້າໃຈກ່ຽວກັບກົນໄກການຄຸ້ມຄອງການຄ້ຳປະກັນຂອງກະຊວງການເງິນ, ລົງວັນທີ 29 ຕຸລາ 2024 ທີ່ກ່ຽວຂ້ອງກັບການຖອນຮຸ້ນໃນກິດຈະການຂອງບໍລິສັດຮຸ້ນສ່ວນ.

14. ລາຍຈ່າຍຄ້າງຈ່າຍ

	ແບບສັງລວມ		*ແບບແຍກກິດຈະການ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ລາຍຈ່າຍດອກເບ້ຍຄ້າງຈ່າຍ	306,741	427,687	306,741	427,687
ລາຍຈ່າຍຄ່າພາກຫຼວງຄ້າງຈ່າຍ	82,639	77,387	82,639	77,387
ອາກອນຄ້າງຈ່າຍອື່ນໆ	163,934	163,106	152,859	153,661
ອື່ນໆ	3,325	7,913	986	2,610
	556,639	**676,093**	**543,225**	**661,345**

15. ຮຸ້ນທຶນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ ສາມັນ ຮຸ້ນ	*ມູນຄ່າ ລ້ານກີບ*	*ສ່ວນເພີ່ມມູນ ຄ່າຮຸ້ນ ລ້ານກີບ*	*ລວມຮຸ້ນທຶນ ທັງໝົດ ລ້ານກີບ*
ນະວັນທີ 31 ທັນວາ 2023	1,679,303,697	6,717,215	985,621	7,702,836
ອອກຮຸ້ນເພີ່ມ	-	-	-	-
ນະວັນທີ 31 ທັນວາ 2024	**1,679,303,697**	**6,717,215**	**985,621**	**7,702,836**

ຈຳນວນຮຸ້ນສາມັນທີ່ໄດ້ຈົດທະບຽນທັງໝົດແມ່ນ 1,679,303,697 ຮຸ້ນ, ມູນຄ່າກຳນົດ 4,000 ກີບຕໍ່ຮຸ້ນ. ນະວັນທີ 31 ທັນວາ 2024 ແລະ 31 ທັນວາ 2023 , ຮຸ້ນທັງໝົດແມ່ນໄດ້ຊຳລະຄົບ ແລະ ໄດ້ຈົດທະບຽນກັບກະຊວງ ອຸດສາຫະກຳ ແລະ ການຄ້າ.

16. ຕົ້ນທຶນການຂາຍ

	ແບບສັງລວມ		*ແບບແຍກກິດຈະການ*	
	2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ຄ່າວັດສະດຸ, ການສ້ອມແປງ ແລະ ບຳລຸງຮັກສາ	35,377	28,853	35,377	28,853
ເງິນເດືອນ ແລະ ສະຫວັດດີການອື່ນໆ	38,799	27,753	38,799	27,753
ຄ່າຫຼຸ້ຍຫ້ຽນ	536,083	572,086	536,083	572,086
ຄ່າພາສີຫຼວງ	12,188	14,363	12,188	14,363
ຄ່າປະກັນໄພເຂື່ອນ	22,326	33,096	22,326	33,096
ອື່ນໆ	10,828	17,505	10,828	17,505
	655,601	693,656	655,601	693,656

17. ລາຍຮັບອື່ນໆ

	ແບບສັງລວມ		*ແບບແຍກກິດຈະການ*	
	2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ລາຍຮັບດອກເບ້ຍ	9,189	7,334	9,816	7,334
ລາຍຮັບເງິນປັນຜົນ	-	-	13,113	10,410
ກຳໄລຈາກການສະສາງຊັບສິນບັດຖິທີ່	854	544	854	544
ລາຍຮັບອື່ນໆຈາກການບໍລິການ (*)	143,408	86,611	69,347	34,724
ກຳໄລຈາກການສະສາງດອນສະໂຮງ	-	200,366	-	200,366
ກຳໄລຈາກການສະສາງ ບໍລິສັດ ອີດີ ແອ-ເຈັນ ໂຊລ່າ	-	87,563	-	87,563
ການຍົກເວັ້ນພາສີ	-	80,447	-	80,447
	153,451	**462,865**	**93,130**	**421,388**

(*) ຄ່າທຳນຽມການບໍລິການສ່ວນໃຫຍ່ແມ່ນລວມມີຄ່າທີ່ປຶກສາ, ຄ່າບຳລຸງຮັກສາສຳລັບການບໍລິການທີ່ສະໜອງໃຫ້ແກ່ບໍລິສັດ ໄຟຟ້ານ້ຳຕົກ ແລະ ບໍລິສັດກໍ່ສ້າງໃນລາວ.

18. ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ

	ແບບສັງລວມ		*ແບບແຍກກິດຈະການ*	
	2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ເງິນເຮ ແລະ ຄ່າເສື່ອມຂອງຊັບສິນ	98,617	-	98,617	-
ເງິນເດືອນ ແລະ ສະຫວັດດີການອື່ນໆ	123,720	103,670	77,412	74,211
ຄ່າບໍລິການພາຍນອກ	111,549	93,517	91,941	87,177
ລາຍຈ່າຍຄ່ານ້ຳມັນ ແລະ ຄ່າຂົນສົ່ງ	23,174	21,209	22,599	21,140
ຄ່າຫຼຸ້ຍຫ້ຽນ	1,309	681	-	-
ລາຍຈ່າຍອື່ນໆ	30,617	22,142	22,583	18,842
	388,986	**241,219**	**313,152**	**201,370**

19. ຕົ້ນທຶນທາງການເງິນ

	ແບບສັງລວມ		*ແບບແຍກກິດຈະການ*	
	2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ລາຍຈ່າຍດອກເບ້ຍຈາກ:				
ຮຸ້ນກູ້	1,180,519	1,145,781	1,180,519	1,145,781
ເງິນກູ້ຈາກພາກສ່ວນທີ່ກ່ຽວຂ້ອງ	2,218	1,923	2,218	1,923
ເງິນກູ້ຈາກສະຖາບັນການເງິນ	102,259	85,147	102,259	85,147
ອື່ນໆ	-	372	-	356
	1,284,996	**1,233,223**	**1,284,996**	**1,233,207**

20. ລາຍຈ່າຍອາກອນກຳໄລ

ອີງຕາມສັນຍາສຳປະທານກັບລັດຖະບານລາວ, ບໍລິສັດມີພັນທະຈະຕ້ອງເສຍອາກອນລາຍໄດ້ສຸດທິຂອງຕົນ ໃນອັດຕາ (10%) ຂອງກຳໄລສຸດທິຫຼັງຈາກການດັດແກ້ສຳລັບລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຮັບທາງອາກອນ ແລະ ລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຈ່າຍທາງອາກອນ ແລະ ອື່ນໆຕາມກົດໝາຍວ່າດ້ວຍສ່ວຍສາອາກອນຂອງ ສປປ ລາວ.

ກຸ່ມບໍລິສັດບໍ່ໄດ້ຮັບຮູ້ຜົນຕ່າງຊື່ອຄາວໃນອະນາຄົດຂອງໜີ້ຕ້ອງສິ່ງ ຫຼື ໜີ້ຕ້ອງຮັບທາງອາກອນລາຍໄດ້. ລາຍຈ່າຍອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນການດຳເນີນງານຕາມໄລຍະ ແລະ ກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ຂອງ ສປປ ລາວ.

	ແບບລັງລວມ		*ແບບແຍກກິດຈະການ*	
	2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ຂາດທຶນ ກ່ອນອາກອນ	**(1,707,390)**	**(1,092,617)**	**(1,702,012)**	**(1,101,031)**
ດັດແກ້ເພີ່ມຂຶ້ນ/(ຫຼຸດລົງ):				
ລາຍຮັບອື່ນໆຈາກການຍົກເວັ້ນອາກອນກຳໄລ	-	80,447	-	80,447
ລາຍຮັບຈາກການສະສາງຮຸ້ນຈາກການລົງທຶນໃນບໍລິສັດອື່ນ	-	287,929	-	287,929
ລາຍຮັບຈາກເງິນປັນຜົນທີ່ບໍ່ໄດ້ຖືກເສຍອາກອນກຳໄລ	-	-	(13,113)	(10,410)
ກຳໄລໃນຮຸ້ນຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	(1,630,986)	(1,279,641)	(1,630,986)	(1,279,640)
ການຫັກເງິນແຮໜີ້ສິງໃສ	98,617	-	98,617	-
ລາຍຈ່າຍທີ່ບໍ່ສາມາດຫັກເປັນລາຍຈ່າຍ	6,163	1,537	3,938	1,419
ຂາດທຶນສຸດທິກ່ອນອາກອນຫຼັງການດັດແກ້ ແລະ ຂາດທຶນທາງອາກອນຍົກຍອດມາ	**(3,233,596)**	**(2,002,345)**	**(3,243,556)**	**(2,021,286)**
ຂາດທຶນທາງອາກອນຍົກຍອດມາ	-	-	-	-
ຂາດທຶນທາງອາກອນ	**(3,233,596)**	**(2,002,345)**	**(3,243,556)**	**(2,021,286)**
ຄ່າໃຊ້ຈ່າຍອາກອນລາຍໄດ້ທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ	3,127	-	-	-

ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ມາດຕາ 23, ການຂາດທຶນປະຈຳປີ ທີ່ໄດ້ຮັບການຢັ້ງຢືນຈາກອົງການກວດສອບ ຫຼື ບໍລິສັດກວດສອບອິດສະຫຼະ ແລະ ຮັບຮູ້ໂດຍກົມສ່ວຍສາອາກອນ ແມ່ນສາມາດນຳໄປຫັກລົບກັບຜົນກຳໄລທີ່ຕ້ອງເສຍອາກອນໃນອະນາຄົດ ສຳລັບໄລຍະເວລາ 5 ປີ ຫຼັງຈາກມີການຂາດທຶນເກີດຂຶ້ນ. ມາຮອດວັນທີ 31 ທັນວາ 2024, ບໍລິສັດມີການຂາດທຶນອາກອນສະສົມ.

20. ລາຍຈ່າຍອາກອນກຳໄລ (ຕໍ່)

			ແບບສັງລວມ		
ປີກຳເນີດ	*ສາມາດນຳໃຊ້ເຖິງ*	*ຈຳນວນການສູນເສຍອາກອນ ລ້ານກີບ*	*ໄດ້ນຳໃຊ້ເຖິງ ວັນທີ 31 ທັນວາ 2024 ລ້ານກີບ*	*ຖືກຍົດຊັບສິນ ລ້ານກີບ*	*ບໍ່ໄດ້ນຳໃຊ້ໃນວັນທີ 31 ທັນວາ 2024 ລ້ານກີບ*
2023 (*)	2028	2,002,345	-	-	2,002,345
2024 (*)	2029	3,233,596	-	-	3,233,596
		5,235,941	**-**	**-**	**5,235,941**

			ແບບແຍກກິດຈະການ		
ປີກຳເນີດ	*ສາມາດນຳໃຊ້ເຖິງ*	*ຈຳນວນການສູນເສຍອາກອນ ລ້ານກີບ*	*ໄດ້ນຳໃຊ້ເຖິງ ວັນທີ 31 ທັນວາ 2024 ລ້ານກີບ*	*ຖືກຍົດຊັບສິນ ລ້ານກີບ*	*ບໍ່ໄດ້ນຳໃຊ້ໃນວັນທີ 31 ທັນວາ 2024 ລ້ານກີບ*
2023 (*)	2028	2,021,286	-	-	2,021,286
2024 (*)	2029	3,243,556	-	-	3,243,556
		5,264,842	**-**	**-**	**5,264,842**

(*) ນະວັນທີລາຍງານຂອງເອກະສານລາຍງານການເງິນນີ້, ການກວດການປະເມີນອາກອນ ສຳລັບຮອບເວລາດັ່ງກ່າວ ຍັງດຳເນີນການບໍ່ສຳເລັດຈາກເຈົ້າໜ້າທີ່ກົມສ່ວຍສາອາກອນ.

21. ພື້ນຖານກຳໄລຕໍ່ຮຸ້ນ

ການຄິດໄລ່ພື້ນຖານກຳໄລຕໍ່ຮຸ້ນ ນະວັນທີ 31 ທັນວາ 2024 ແລະ 2023 ແມ່ນອີງໃສ່ຜົນກຳໄລສຳລັບງວດທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ ແລະ ຍອດເຫຼືອຈຳນວນຮຸ້ນສາມັນສະເລ່ຍຖ່ວງນ້ຳໜັກທີ່ອອກຈຳໜ່າຍດັ່ງນີ້:

	ແບບສັງລວມ		*ແບບແຍກກິດຈະການ*	
	2024	*2023*	*2024*	*2023*
ກຳໄລຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ *(ລ້ານກີບ)*	(1,700,867)	(1,096,381)	(1,702,012)	(1,101,031)
ຍອດເຫຼືອຈຳນວນຮຸ້ນສາມັນທີ່ໄດ້ຈຳໜ່າຍອອກ *(ລ້ານຮຸ້ນ)*	1,679	1,679	1,679	1,679
ລາຍໄດ້ຕໍ່ຫຸ້ນ	**(1,013)**	**(653)**	**(1,014)**	**(656)**

22. ພາກສ່ວນທີ່ກ່ຽວຂ້ອງ

ຂໍ້ຕົກລົງທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງສຳລັບປີສິ້ນສຸດວັນທີ 31 ທັນວາ 2024 ສາມາດສະຫຼຸບໄດ້ດັ່ງນີ້:

ຂໍ້ຕົກລົງການຊື້ພະລັງງານ (*"PPA"*)

ໃນວັນທີ 15 ທັນວາ 2010 ແລະ ການແກ້ໄຂໃນວັນທີ 9 ທັນວາ 2011, ກຸ່ມບໍລິສັດໄດ້ຊັ້ນສັນຍາການຊື້ - ຂາຍໄຟ ("PPA") ກັບ ໄຟຟ້າລາວ. ສັນຍາດັ່ງກ່າວ PPA ກຳນົດໄລຍະເວລາ 30 ປີພ້ອມກັບໄລຍະເວລາຕໍ່ອາຍຸ 10 ປີເຊິ່ງເປັນໄລຍະເວລາດຽວກັນກັບສັນຍາສຳປະທານ.

ແຫຼ່ງລາຍຮັບຫຼັກແມ່ນມາຈາກການຂາຍໄຟຟ້າໃຫ້ ຟຟລ ອີງຕາມສັນຍາການຊື້ - ຂາຍໄຟຟ້າທີ່ຜະລິດຈາກຊັບສິນທີ່ມີຢູ່, ການຂາຍໄຟຟ້າຈະຂຶ້ນຢູ່ກັບອັດຕາໄຟຟ້າຕາມທີ່ໄດ້ຕົກລົງກັນກັບ ຟຟລ ເຊິ່ງໄດ້ກຳນົດໄວ້ໃນສັນຍາການຊື້ - ຂາຍໄຟຟ້າທີ່ກ່ຽວຂ້ອງ ສຳລັບແຕ່ລະຊັບສິນການຜະລິດທີ່ມີຢູ່.

ຂໍ້ຕົກລົງການຊຳລະຄືນຫນີ້ສິນ

ກຸ່ມບໍລິສັດ ໄດ້ລົງນາມໃນສັນຍາການຊຳລະໜີ້ ("ສັນຍາ") ກັບ ໄຟຟ້າລາວ. ໄຟຟ້າລາວ ເປັນຜູ້ກູ້ຢືມຕາມຂໍ້ຕົກລົງກູ້ຢືມຫຼາຍສະບັບ ກັບ ລັດຖະບານແຫ່ງ ສປປ ລາວ ("ລັດຖະບານ") ເຊິ່ງເງິນຈຳນວນດັ່ງກ່າວໄດ້ສະໜອງຈາກຜູ້ໃຫ້ກູ້ຫຼາຍລາຍ ໂດຍຜ່ານ ລັດຖະບານລາວ. ນອກຈາກການໂອນຊັບສິນແລ້ວ, ກຸ່ມບໍລິສັດຍັງໄດ້ຕົກລົງກັບ ໄຟຟ້າລາວ ວ່າກຸ່ມບໍລິສັດຈະຊຳລະໜີ້ທີ່ຍັງຄ້າງໃຫ້ ໄຟຟ້າລາວ ແລະ ໄຟຟ້າລາວຈະຊຳລະໜີ້ດັ່ງກ່າວໃຫ້ກັບ ລັດຖະບານ, ເພື່ອເປັນການຊຳລະຄືນຂອງ ລັດຖະບານ ໃຫ້ກັບ ຜູ້ກູ້ຢືມຕາມສັນຍາກູ້ຢືມເດີມ. ເງິນກູ້ເຫຼົ່ານີ້ບໍ່ມີຫຼັກຄ้ำປะກັນ ແລະ ບໍ່ມີພັນທະອື່ນນອກເໜືອໄປຈາກການຊຳລະຄືນຕາມກຳນົດເວລາທີ່ໄດ້ຕົກລົງກັນ.

ຂໍ້ຕົກລົງການບໍລິການຄຸ້ມຄອງ ແລະ ການບຳລຸງຮັກສາ

ບໍລິສັດໄດ້ເຊັນສັນຍາການບໍລິການດ້ານການກໍ່ສ້າງ ແລະ ບຳລຸງຮັກສາອາຄານ ແລະ ຫ້ອງການ, ການກໍ່ສ້າງສາຍສົ່ງ ແລະ ອື່ນໆ ກັບຜູ້ສະໜອງຫຼາຍພາກສ່ວນ.

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງສຳລັບປີປະຈຸບັນ ແລະ ປີທີ່ຜ່ານມາມີດັ່ງນີ້:

ພາກສ່ວນທີ່ ກ່ຽວຂ້ອງ	*ທຸລະກຳ*	*ແບບສັງລວມ*		*ແບບແຍກກິດຈະການ*	
		2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ລັດວິສາຫະກິດ ໄຟຟ້າລາວ	ຂາຍໄຟຟ້າ ພາຍໃນ	1,218,842	1,410,011	1,218,842	1,410,011
	ປະເພດ ລາຍຮັບດອກເບ້ຍ	2,218	1,923	2,218	1,923

ການຂາຍໄຟຟ້າໃຫ້ ຟຟລ ແມ່ນອີງໃສ່ອັດຕາ ແລະເງື່ອນໄຂທີ່ໄດ້ຕົກລົງກັນ.

22. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດຄົງຄ້າງຊຳລະຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນວັນທີ 31 ທັນວາ 2024 ແລະ ວັນທີ 31 ທັນວາ 2023 ມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ທຸລະກຳ*	*ແບບສັງລວມ*		*ແບບແຍກກິດຈະການ*	
		31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
		ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ເງິນລ່ວງໜ້າ *(ປົດອະທິບາຍເລກທີ 5)*					
ຟຟລ	ບໍລິສັດແມ່	1,973,407	1,973,407	1,973,407	1,973,407
ອີດີແອວເຈັນ ໂອ ແອນເອັມ	ບໍລິສັດໃນເຄືອ	-	-	7,025	7,025
		1,973,407	**1,973,407**	**1,980,432**	**1,980,432**
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ *(ປົດອະທິບາຍເລກທີ 9)*					
ໜີ້ຕ້ອງຮັບທາງການຄ້າ					
ຟຟລ	ບໍລິສັດແມ່	319,336	1,009,321	319,336	1,009,321
ໜີ້ຕ້ອງຮັບອື່ນໆ					
ຟຟລ	ບໍລິສັດແມ່	710,872	179,573	710,872	179,573
ນ້ຳປີ	ບໍລິສັດໃນເຄືອ	-	-	30,537	9,145
ອີດີແອວເຈັນ ໂອແອນ ເອັມ	ບໍລິສັດໃນເຄືອ	-	-	49,362	14,025
ນ້ຳເທີນ 1 *(*)*	ບໍລິສັດຮຸ້ນສ່ວນ	122,475	107,958	122,475	107,958
ເທີນ - ຫີນບຸນ	ບໍລິສັດຮຸ້ນສ່ວນ	-	317,229	-	317,229
		833,347	**604,760**	**913,246**	**627,930**

(*) ສັນຍາກູ້ຢືມຂອງຜູ້ຖືຮຸ້ນ

ໃນວັນທີ 9 ທັນວາ 2022, ກຸ່ມບໍລິສັດໄດ້ເຊັນສັນຍາກູ້ຢືມໄລຍະຍາວໃຫ້ແກ່ບໍລິສັດໄຟຟ້ານ້ຳເທີນ 1 ຈຳກັດ ໂດຍມີວົງເງິນກູ້ຢືມ 6,3 ລ້ານ ໂດລາສະຫະລັດ ເພື່ອແນໃສ່ພັດທະນາ ແລະ ດຳເນີນໂຄງການ. ເງິນກູ້ມີອັດຕາດອກເບ້ຍເທົ່າກັບ LIBOR ບວກ 2% ຕໍ່ປີ.

22. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ທຸລະກຳ*	*ແບບສັງລວມ*		*ແບບແຍກກິດຈະການ*	
		31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
		ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ *(ເອກະສານເລກທີ 13)*					
ຟຟລ	ບໍລິສັດແມ່	486	62,293	486	62,293
ນ້ຳປີ	ບໍລິສັດໃນເຄືອ	-	-	-	62,273
ນ້ຳລອງ	ວິສະຫະກິດຂາຮຸ້ນ	14,256	13,389	14,256	13,389
ນ້ຳດີກ 1-2	ວິສະຫະກິດຂາຮຸ້ນ	97,262	91,346	97,262	91,346
		112,004	**167,028**	**112,004**	**229,301**
ເງິນກູ້ຢືມໄລຍະຍາວ *(ເອກະສານເລກທີ 11)*					
ຟຟລ	ບໍລິສັດແມ່				
-ເງິນກູ້ໝູນວຽນ		48,253	12,721	48,253	12,721
-ເງິນກູ້ບໍ່ໝູນວຽນ		32,168	45,318	32,168	45,318
		80,421	**58,039**	**80,421**	**58,039**

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວຈາກພາກທີ່ສ່ວນກ່ຽວຂ້ອງສຳລັບປີສິ້ນສຸດ 31 ທັນວາ 2024 ແລະ ນະວັນທີ 31 ທັນວາ 2023 ມີດັ່ງນີ້:

	ແບບສັງລວມ		*ແບບແຍກກິດຈະການ*	
	31 ທັນວາ 2024	*31 ທັນວາ 2023*	*31 ທັນວາ 2024*	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ນະວັນທີ 1 ມັງກອນ	58,039	63,606	58,039	63,606
ກູ້ຢືມເພີ່ມໃນປີ	-	-	-	-
ການຊຳລະຄືນ	-	(15,106)	-	(15,106)
ຜົນກະທົບຈາກການຕີມູນຄ່າສະກຸນເງິນຄືນໃໝ່	22,382	9,539	22,382	9,539
ນະວັນທີ 31 ທັນວາ	**80,421**	**58,039**	**80,421**	**58,039**

23. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີ່ອອກເອກະສານລາຍງານການເງິນ

ບໍ່ມີບັນຫາ ຫຼື ບໍ່ມີສະຖານະການໃດທີ່ເຮັດໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນແບບສັງລວມ ແລະ ແບບແຍກກິດຈະການ ຕັ້ງແຕ່ວັນທີ 31 ທັນວາ 2024 ຈົນເຖິງວັນທີ່ອອກເອກະສານລາຍງານການເງິນຂອງກຸ່ມ/ບໍລິສັດ.

ທ່ານ ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຮອງຜູ້ອຳນວຍການໃຫ່ຍ ສາຍງານການເງິນ

31 ມີນາ 2025